ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

# ກົດໝາຍ
# ວ່າດ້ວຍສື່ມວນຊົນ


ຈັດພິມໂດຍ: ກະຊວງຖະແຫລງຂ່າວ
ແລະ ວັດທະນະທຳ

2009


(ສະຫງວນລິຂະສິດ)

8.1.2014.

ບຸນສິງ ແກ້ວບົວລາຍ

# ກົດໝາຍ

## ວ່າດ້ວຍສື່ມວນຊົນ

ຈັດພິມໂດຍ: ກະຊວງຖະແຫລງຂ່າວ

ແລະ ວັດທະນະທຳ

ພິມຄັ້ງທີ I ຈຳນວນ1.500 ຫົວ

ສະຫງວນ ລິຂະສິດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ສະພາແຫ່ງຊາດ ເລກທີ 94 / ສພຊ

# ມະຕິຕົກລົງ
## ຂອງ
## ສະພາແຫ່ງຊາດ ແຫ່ງ
## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
## ກ່ຽວກັບການຕົກລົງຮັບຮອງເອົາກົດໝາຍວ່າດ້ວຍສື່ມວນຊົນ

---

- ອີງຕາມມາດຕາ 53 ຂໍ້ 2 ຂອງລັດຖະທຳມະນູນ ແລະ ມາດຕາ 3 ຂໍ້ 2 ຂອງກົດໝາຍວ່າດ້ວຍ ສະພາແຫ່ງຊາດ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາ ຊົນລາວ ກ່ຽວກັບສິດ ແລະ ໜ້າທີ່ຂອງສະພາແຫ່ງຊາດ.

ພາຍຫລັງທີ່ກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດຊຸດທີ VI ໄດ້ຄົ້ນຄວ້າພິຈາລະນາຢ່າງກວ້າງຂວາງແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງ ກົດໝາຍວ່າດ້ວຍ ສື່ມວນຊົນ ໃນວາລະປະຊຸມຕອນເຊົ້າຂອງວັນທີ 25 ກໍລະ ກົດ 2008,

## ກອງປະຊຸມໄດ້ຕົກລົງ:

ມາດຕາ 1. ຮັບຮອງເອົາກົດໝາຍວ່າດ້ວຍສື່ມວນຊົນ ດ້ວຍຄະແນນສຽງເຫັນດີ ເປັນ ສ່ວນຫລາຍ.

ມາດຕາ 2. ມະຕິຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ນະຄອນຫລວງວຽງຈັນ, ວັນທີ 25 ກໍລະກົດ 2008

ປະທານສະພາແຫ່ງຊາດ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ເລກທີ 108 ປປທ
ນະຄອນຫລວງວຽງຈັນ, ວັນທີ 18 ສິງຫາ 2008

# ລັດຖະດຳລັດ

## ຂອງປະທານປະເທດ
## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

# ກ່ຽວກັບການປະກາດໃຊ້ກົດໝາຍ ວ່າດ້ວຍສິ່ງມໍລະດົກ

- ອີງຕາມລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໝວດທີ VI ມາດຕາ 67 ຂໍ້ 1 ກ່ຽວກັບການປະກາດໃຊ້ລັດຖະທຳມະນູນ ແລະ ກົດໝາຍທີ່ສະພາແຫ່ງຊາດໄດ້ຕົກລົງຮັບຮອງເອົາແລ້ວ;
- ອີງຕາມມະຕິຕົກລົງຂອງສະພາແຫ່ງຊາດ ແຫ່ງ ສາທາລະນະລັດ ປະຊາທິປະໄຕຊາຊົນລາວ ສະບັບເລກທີ 94/ສພຊ, ລົງວັນທີ 25 ກໍລະກົດ 2008 ກ່ຽວກັບການຕົກລົງຮັບຮອງເອົາກົດໝາຍວ່າດ້ວຍສິ່ງມໍລະດົກ;
- ອີງຕາມໜັງສືສະເໜີ ຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 22/ຄປຈ, ລົງວັນທີ 11 ສິງຫາ 2008.

## ປະທານປະເທດ

ສາທາລະນະລັດປະຊາທິປະໄຕປະຊາຊົນລາວ ອອກລັດຖະດຳລັດ:

ມາດຕາ 1 : ປະກາດໃຊ້ກົດໝາຍ ວ່າດ້ວຍສິ່ງມໍລະດົກ.

ມາດຕາ 2 : ລັດຖະດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ປະທານປະເທດ ແຫ່ງ ສປປ ລາວ.

ຈູມມະລີ ໄຊຍະສອນ

# ສາລະບານ
## ກົດໝາຍວ່າດ້ວຍ ສື່ມວນຊົນ


| ມາດຕາ | ຫົວຂໍ້ | ໜ້າ |
|---|---|---|
| ໝວດທີ I | ບົດບັນຍັດທົ່ວໄປ | |
| ມາດຕາ 1: | ຈຸດປະສົງ | 1 - 2 |
| ມາດຕາ 2: | ສື່ມວນຊົນ | 2 |
| ມາດຕາ 3: | ການອະທິບາຍຄຳສັບ | 3 |
| ມາດຕາ 4: | ນະໂຍບາຍຂອງລັດກ່ຽວກັບ ວຽກງານສື່ມວນຊົນ | 4 |
| ມາດຕາ 5: | ການຮ່ວມມືສາກົນ | 5 - 6 |
| ໝວດທີ II | ປະເພດ ແລະ ລັກສະນະຂອງສື່ມວນຊົນ | |
| ມາດຕາ 6: | ປະເພດສື່ມວນຊົນ | 6 |
| ມາດຕາ 7: | ສື່ສິ່ງພິມ | 6 |
| ມາດຕາ 8: | ສື່ເອເລັກໂຕຣນິກ | 7 |
| ມາດຕາ 9: | ລັກສະນະຂອງສື່ມວນຊົນລາວ | 7 |
| ມາດຕາ10: | ລັກສະນະຕົວຈິງ | 7 |
| ມາດຕາ 11: | ລັກສະນະສຶກສາອົບຮົມ | 8 |
| ມາດຕາ 12: | ລັກສະນະຈັດຕັ້ງຊີ້ນຳ | 8 |
| ມາດຕາ 13: | ລັກສະນະຕໍ່ສູ້ | 8 |
| ໝວດທີ III | ສິດເສລີພາບຂອງພົນລະເມືອງລາວ ດ້ານສື່ມວນຊົນ | |

| | | |
|---|---|---|
| ມາດຕາ 14: | ສິດເສລີພາບຂອງພົນລະເມືອງລາວ ດ້ານສື່ມວນຊົນ | 9 |
| ມາດຕາ 15: | ສິດເສລີພາບຂອງພົນລະເມືອງລາວ ໃນການປະກອບຄຳຄິດຄຳເຫັນ | 9 |
| ມາດຕາ 16: | ສິດເສລີພາບຂອງພົນລະເມືອງລາວ ກ່ຽວກັບຂໍ້ມູນຂ່າວສານ | 10 |
| ມາດຕາ 17: | ການປະຕິບັດສິດເສລີພາບຂອງພົນລະ ເມືອງລາວ | 10 |
| ໝວດທີ IV | ວຽກງານສື່ມວນຊົນ | |
| ມາດຕາ 18: | ວຽກງານສື່ມວນຊົນ | 11 |
| ມາດຕາ19: | ການຊອກຮູ້, ເກັບກຳຂໍ້ມູນຂ່າວສານ | 11- 12 |
| ມາດຕາ 20: | ການໄດ້ຮັບການສະໜອງຂໍ້ມູນຂ່າວ ສານຈາກສັງຄົມ | 12 |
| ມາດຕາ 21: | ການເຜີຍແຜ່ບົດ, ຂ່າວສານ ແລະ ແຈ້ງການຕ່າງໆ | 13 |
| ມາດຕາ 22: | ການໃຫ້ຄຳຕອບ | 13 |
| ມາດຕາ 23: | ການແກ້ຂ່າວ | 14 |
| ມາດຕາ 24: | ການບໍລິການ | 14 |
| ມາດຕາ 25: | ການບັນເທີງ | 15 |
| ໝວດທີ V | ການສ້າງຕັ້ງ ແລະ ບຸກຄະລະກອນຂອງ ສື່ມວນຊົນ | |
| ມາດຕາ 26: | ການຈັດຕັ້ງຂອງສື່ມວນຊົນ | 16 |

| | | |
|---|---|---|
| ມາດຕາ 27: | ເຈົ້າຂອງອົງການສື່ມວນຊົນ | 16 |
| ມາດຕາ 28: | ໜ້າທີ່ ແລະ ສິດຂອງເຈົ້າຂອງອົງການສື່ມວນຊົນ | 16 |
| ມາດຕາ 29: | ອົງການສື່ມວນຊົນ | 18 |
| ມາດຕາ 30: | ໜ້າທີ່ ແລະ ສິດຂອງອົງການສື່ມວນຊົນ | 18 |
| ມາດຕາ 31: | ສະມາຄົມນັກຂ່າວແຫ່ງ ສ .ປ.ປ ລາວ | 21 |
| ມາດຕາ 32: | ບຸກຄະລາກອນຂອງສື່ມວນຊົນ | 22 |
| ມາດຕາ 33: | ຫົວໜ້າ ແລະ ຮອງຫົວໜ້າຂອງອົງການສື່ມວນຊົນ | 22 |
| ມາດຕາ 34: | ມາດຕະຖານຂອງຫົວໜ້າ ແລະ ຮອງຫົວໜ້າຂອງອົງການສື່ມວນຊົນ | 23 |
| ມາດຕາ 35: | ໜ້າທີ່ ແລະ ສິດຂອງຫົວໜ້າ ແລະ ຮອງຫົວໜ້າຂອງອົງການສື່ມວນຊົນ | 23 |
| ມາດຕາ 36: | ມາດຕະຖານຂອງນັກຂ່າວ | 24 |
| ມາດຕາ 37: | ໜ້າທີ່ ແລະ ສິດຂອງນັກຂ່າວ | 24 |
| ມາດຕາ 38: | ນັກວິຊາການດ້ານສື່ມວນຊົນ | 26 |
| ມາດຕາ 39: | ຜູ້ຮ່ວມງານ | 27 |
| ໝວດທີ VI | ການສ້າງຕັ້ງ ແລະ ເຄື່ອນໄຫວຂອງອົງການສື່ມວນຊົນ | |
| ມາດຕາ 40: | ເງື່ອນໄຂການສ້າງອົງການສື່ມວນຊົນ | 28 |
| ມາດຕາ 41: | ການສ້າງຕັ້ງສຳນັກງານ ຜູ້ຕາງໜ້າອົງການສື່ມວນຊົນ | 28 |
| ມາດຕາ 42: | ການພິມ ແລະ ຈຳໜ່າຍສີ່ສິ່ງພິມ | 29 |

| | | |
|---|---|---|
| ມາດຕາ 43: | ການເພີ່ມໜ້າພິມຂອງສື່ສິ່ງພິມ | 29 |
| ມາດຕາ 44: | ການເພີ່ມລາຍການວິທະຍຸກະຈາຍສຽງ ແລະ ໂທລະພາບ | 30 |
| ມາດຕາ 45: | ລາຍການກະຈາຍສຽງ ແລະ ພາບ | 30 |
| ມາດຕາ 46: | ການນຳໃຊ້ສື່ຜ່ານອິນເຕີເນັດ | 31 |
| ມາດຕາ 47: | ການສຳເນົາຜະລິດຕະພັນສື່ມວນຊົນ | 30-31 |
| ມາດຕາ 48: | ການຈັດກອງປະຊຸມຖະແຫລງຂ່າວ | 31 |
| ມາດຕາ 49: | ການເງິນຂອງອົງການສື່ມວນຊົນ | 31 |
| ໝວດທີ VII | ຂໍ້ຫ້າມ | |
| ມາດຕາ 50: | ຂໍ້ຫ້າມສຳລັບອົງການສື່ມວນຊົນ | 32 |
| ມາດຕາ 51: | ຂໍ້ຫ້າມສຳລັບບຸກຄະລາກອນສື່ມວນຊົນ | 34 |
| ມາດຕາ 52: | ຂໍ້ຫ້າມສຳລັບການຈັດຕັ້ງ ແລະ ບຸກຄົນອື່ນ | 34 |
| ໝວດທີ VIII | ການຄຸ້ມຄອງ ແລະ ກວດກາສື່ມວນຊົນ | |
| ມາດຕາ 53: | ອົງການຄຸ້ມຄອງສື່ມວນຊົນ | 35 |
| ມາດຕາ 54: | ໜ້າທີ່ ແລະ ສິດຂອງກະຊວງຖະແຫລງຂ່າວ ແລະ ວັດທະນະທຳ | 36 |
| ມາດຕາ 55: | ໜ້າທີ່ ແລະ ສິດຂອງພະແນກຖະແຫລງຂ່າວ ແລະ ວັດທະນະທຳແຂວງ, ນະຄອນ | 38 |
| ມາດຕາ 56: | ໜ້າທີ່ ແລະ ສິດຂອງຫ້ອງການຖະແຫລງຂ່າວ ແລະ ວັດທະນະທຳເມືອງ, ເທດສະບານ | 40 |


24 / VII
ຫ້າມຈຳໜ່າຍ

ມາດຕາ 57: ໜ້າທີ່ ແລະ ສິດຂອງຂະແໜງການ ແລະ ພາກສ່ວນອື່ນ 41 -42
ມາດຕາ 58: ອົງການກວດກາສື່ມວນຊົນ 42
ມາດຕາ 59: ໜ້າທີ່ ແລະ ສິດຂອງອົງການກວດກາສື່ມວນຊົນ 42
ມາດຕາ 60: ເນື້ອໃນການກວດກາ 44
ມາດຕາ 61: ຮູບການກວດກາ 44

ໝວດທີ IX ວັນ, ເຄື່ອງໝາຍ ແລະ ຕາປະທັບຂອງສື່ມວນຊົນ
ມາດຕາ 62: ວັນຂອງສື່ມວນຊົນ 45
ມາດຕາ 63: ເຄື່ອງໝາຍ ແລະ ຕາປະທັບຂອງສື່ມວນຊົນ 46

ໝວດທີ X: ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ 46
ມາດຕາ 64: ນະໂຍບາຍຕໍ່ຜູ້ມີຜົນງານ 46
ມາດຕາ 65: ມາດຕະການຕໍ່ຜູ້ລະເມີດ 46

ໝວດທີ XI ບົດບັນຍັດສຸດທ້າຍ
ມາດຕາ 66: ການຈັດຕັ້ງປະຕິບັດ 47
ມາດຕາ 67: ຜົນສັກສິດ 47

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 01 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 25 ກໍລະກົດ 2008

# ກົດໝາຍ
# ວ່າດ້ວຍ ສື່ມວນຊົນ

## ໝວດທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ**

ກົດໝາຍວ່າດ້ວຍສື່ມວນຊົນ ກຳນົດ ຫລັກການ, ລະບຽບການ ແລະ ມາດຕະການຕ່າງໆ ກ່ຽວກັບການຈັດຕັ້ງ, ການເຄື່ອນໄຫວ, ການພັດທະນາ, ການຄຸ້ມຄອງ, ການກວດກາສື່ມວນຊົນ ເພື່ອເສີມຂະຫຍາຍບົດບາດ, ຍົກສູງຄຸນນະພາບຂອງສື່ມວນຊົນ ແລະ ຮັບປະກັນການປະຕິບັດສິດ ເສລີພາບດ້ານສື່ມວນຊົນຂອງພົນລະເມືອງ ແນໃສ່ປະກອບສ່ວນເຂົ້າໃນພາລະກິດປົກປັກຮັກສາ ແລະ ພັດທະນາປະເທດຊາດ.

### ມາດຕາ 2. ສື່ມວນຊົນ

ສື່ມວນຊົນ ແມ່ນ ເວທີຖະແຫລງຂ່າວ ທີ່ປະກອບ ດ້ວຍສື່ສິ່ງພິມ, ສື່ເອເລັກໂຕຣນິກ ແລະ ຜະ ລິດຕະພັນສື່ມວນຊົນ, ມີພາລະບົດບາດ ເປັນກະບອກສຽງຂອງອົງການຈັດຕັ້ງ ຂອງພັກ, ລັດ ແລະ ສັງຄົມ ໃນການໂຄສະນາ, ສຶກສາອົບຮົມ ແນວທາງຂອງພັກ, ລະບຽບກົດໝາຍຂອງລັດ, ປຸກລະດົມນ້ຳໃຈຮັກຊາດ, ສະໜອງຂໍ້ມູນ, ຂ່າວສານທາງດ້ານ ການເມືອງ, ເສດຖະກິດ-ສັງຄົມ, ວິທະຍາສາດ, ເຕັກໂນໂລຊີ, ສາລະຄວາມຮູ້, ສາລະບັນເທີງ ໃຫ້ແກ່ສັງຄົມ, ປະກອບສ່ວນຕ້ານປາກົດການຫຍໍ້ທໍ້ໃນສັງຄົມ, ຖ້ອຍທຳນອງທີ່ບິດເບືອນຄວາມຈິງ , ເປັນເວທີເສີມຂະຫຍາຍປະຊາທິປະໄຕ ແລະ ສິດ ເປັນເຈົ້າປະເທດຊາດ ຂອງປະຊາຊົນບັນດາເຜົ່າ.

### ມາດຕາ 3. ການອະທິບາຍຄຳສັບ

ຄໍາສັບຕ່າງໆ ທີ່ນໍາໃຊ້ໃນກົດໝາຍສະບັບນີ້ມີຄວາມໝາຍ ດັ່ງນີ້:

1. **ພາຫະນະສື່ມວນຊົນ** ໝາຍເຖິງ ສື່ສິ່ງພິມ, ສື່ເອເລັກໂຕຣນິກ ລວມທັງ ຜະລິດຕະພັນສື່ມວນຊົນ ;
2. **ຜະລິດຕະພັນສື່ມວນຊົນ** ໝາຍເຖິງ ໜັງສືພິມ, ໃບຂ່າວສານ, ຈົດໝາຍເຫດ, ວາລະ ສານ, ລາຍ ການວິທະຍຸ, ລາຍການໂທລະພາບ, ລາຍການໂທລະໂຄ່ງ, ອິນເຕີເນັດ, ເວັບໄຊ, ກະແຊັດ, ຊີດີ, ວີຊີດີ, ດີວີດີ ແລະ ອື່ນໆ;
3. **ບັນນາທິການ** ໝາຍເຖິງ ຜູ້ກວດແກ້, ກວດຜ່ານ ເນື້ອໃນ ແລະ ຮູບແບບຂອງ ບົດ, ຂ່າວ ແລະ ລາຍການຂອງສື່ມວນຊົນຕ່າງໆ;
4. **ນັກຂ່າວ** ໝາຍເຖິງ ບຸກຄະລາກອນຂອງອົງການສື່ມວນຊົນ ທີ່ເຮັດໜ້າທີ່ ຊອກເກັບກໍາ ຂໍ້ມູນຂ່າວສານ ຢູ່ພາຍໃນ ແລະ ຕ່າງປະເທດ ແລ້ວແຕ່ງເປັນບົດ, ຂ່າວ ແລະ ລາຍ ການສະໜອງໃຫ້ແກ່ພາຫະນະສື່ມວນຊົນ ;
5. **ອິນເຕີເນັດ** ໝາຍເຖິງ ລະບົບເຄືອຂ່າຍຄອມພິວເຕີ ຊຶ່ງສາມາດສົ່ງຂໍ້ມູນຂ່າວສານຫາກັນ ຫລື ສື່ສານກັນ ໂດຍຜ່ານໄປສະນີເອເລັກໂຕຣນິກ, ດ້ວຍການສົ່ງສັນຍານສຽງ ແລະ ພາບ ຫາກັນທາງສາຍ ຫລືທາງອາກາດ. ຂໍ້ມູນຂ່າວສານ ທີ່ສ້າງຂຶ້ນສາມາດ

ຝາກໄວ້ໃນເວັບໄຊ;

6. **ເວັບໄຊ** ໝາຍເຖິງ ໜ້າຂໍ້ມູນຂ່າວສານ ກ່ຽວກັບ ເນື້ອໃນສະເພາະໃດໜຶ່ງ ທີ່ເປັນຕົວໜັງສື, ຮູບພາບ, ແສງ, ສີ, ສຽງ ທີ່ສ້າງຂຶ້ນດ້ວຍບຸກຄົນ, ອົງການຈັດຕັ້ງຕ່າງໆ ຢູ່ພາຍໃນ ແລະ ຕ່າງປະເທດ ຊຶ່ງສົ່ງສັນຍານຜ່ານລະບົບເຄືອຂ່າຍອິນເຕີເນັດ ແລະ ສາມາດເຂົ້າເຖິງໄດ້ທາງຄອມພິວເຕີ, ໂທລະພາບດີຊີຕອນ, ໂທລະສັບມືຖື ດ້ວຍລະຫັດສະເພາະ;

7. **ການຈໍາໜ່າຍເປັນໄລຍະ** ໝາຍເຖິງ ການຈຳໜ່າຍເປັນ ລາຍຕອນ, ລາຍວັນ, ລາຍສັບປະດາ, ລາຍປັກ, ລາຍເດືອນ, ລາຍໄຕມາດ ແລະ ອື່ນໆ.

### ມາດຕາ 4. ນະໂຍບາຍຂອງລັດກ່ຽວກັບວຽກງານສື່ມວນຊົນ

ລັດ ສົ່ງເສີມ ແລະ ພັດທະນາວຽກງານສື່ມວນຊົນຂອງລັດ ໃຫ້ມີການຂະຫຍາຍຕົວຢ່າງກວ້າງ ຂວາງ, ມີຄວາມເຂັ້ມແຂງ ແລະ ມີຄຸນນະພາບ ດ້ວຍການປະຕິບັດນະໂຍບາຍດ້ານຕ່າງໆ ເຊັ່ນ : ການ ສ້າງ ແລະ ປະກອບບຸກຄະລາກອນ, ສະໜອງ ງົບປະມານ, ພາຫະນະ, ວັດຖຸອຸປະກອນ ເຕັກນິກ, ເຕັກໂນໂລຊີ ທີ່ທັນສະໄໝ.

ລັດ ຊຸກຍູ້ ການຈັດຕັ້ງ ແລະ ບຸກຄົນ ທັງພາຍໃນ ແລະ ຕ່າງປະເທດ ປະກອບສ່ວນເຂົ້າໃນ ການພັດທະນາ ສື່ມວນຊົນດ້ວຍການສະໜອງ ພາຫະນະ, ວັດຖຸອຸປະກອນ, ທຶນຮອນ

ແລະ ອື່ນໆ ໃຫ້ແກ່ວຽກງານ ສື່ມວນຊົນລາວ.

ລັດ ມີນະໂຍບາຍ ໃຫ້ການຈັດຕັ້ງ ແລະ ບຸກຄົນ ມີສ່ວນຮ່ວມໃນການດຳເນີນວຽກງານ ດ້ານສື່ມວນຊົນ ຕາມລະບຽບກົດໝາຍ.

ລັດ ອຳນວຍຄວາມສະດວກໃຫ້ແກ່ການຜະລິດ, ການກະຈາຍ ແລະ ການຈຳໜ່າຍ ຜະລິດຕະພັນສື່ມວນຊົນ ທີ່ຖືກຕ້ອງຕາມກົດໝາຍ ຢ່າງກວ້າງຂວາງ ແລະ ທົ່ວເຖິງໃນ ຂອບເຂດທົ່ວປະເທດ ແລະ ອອກສູ່ຕ່າງປະເທດ ຕາມຄວາມເໝາະສົມ.

ລັດ ສົ່ງເສີມ ແລະ ປົກປ້ອງເຈົ້າຂອງອົງການສື່ມວນຊົນ, ອົງການສື່ມວນຊົນ, ນັກຂ່າວ, ຜູ້ຮ່ວມງານ ແລະ ນັກວິຊາການດ້ານສື່ມວນຊົນ ທີ່ເຄື່ອນໄຫວຖືກຕ້ອງຕາມລະບຽບກົດໝາຍ.

ລັດ ຮັບປະກັນໃຫ້ພົນລະເມືອງລາວ ໄດ້ປະຕິບັດສິດເສລີພາບ ແລະ ພັນທະຂອງຕົນດ້ານສື່ມວນຊົນ, ສ້າງເງື່ອນໄຂ, ອຳນວຍຄວາມສະດວກ ແລະ ປົກປ້ອງຜູ້ ສະໜອງຂໍ້ມູນຂ່າວສານ, ປະກອບຄຳເຫັນ, ສະແດງທັດສະນະ, ຕຳນິຕິຊົມ ທີ່ບໍ່ຂັດກັບລະບຽບກົດໝາຍ, ບໍ່ຂັດກັບຜົນປະໂຫຍດ ຂອງຊາດ ແລະ ປະຊາຊົນ ຜ່ານສື່ມວນຊົນ.

### ມາດຕາ 5. ການຮ່ວມມືສາກົນ

ລັດ ສົ່ງເສີມການພົວພັນ, ຮ່ວມມື ດ້ານສື່ມວນຊົນ ກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ດ້ວຍການຊຸກຍູ້ ການເຄື່ອນໄຫວ ດ້ານວິຊາການ, ການແລກປ່ຽນບົດຮຽນ, ຂໍ້ມູນ

ຂ່າວສານ, ວິທະ ຍາ ສາດ, ເຕັກໂນໂລຊີ, ການສ້າງບຸກຄະລາ ກອນ, ການຍາດແຍ່ງການສະໜັບສະໜູນ ແລະ ຊ່ວຍເຫລືອ ດ້ານຕ່າງໆ ເພື່ອຜົນປະໂຫຍດລວມຂອງຊາດ, ເຮັດໃຫ້ວຽກ ງານສື່ມວນຊົນ ມີຄຸນນະພາບ ແລະ ທັນສະໄໝ ບົນພື້ນຖານ ເຄົາລົບເອກະລາດ, ອະທິປະໄຕ ເຊິ່ງກັນ ແລະ ກັນ, ຕ່າງຝ່າຍ ຕ່າງໄດ້ຮັບຜົນ ປະໂຫຍດ.

## ໝວດທີ II
## ປະເພດ ແລະ ລັກສະນະ ຂອງສື່ມວນຊົນ

**ມາດຕາ 6. ປະເພດຂອງສື່ມວນຊົນ**

ສື່ມວນຊົນ ແບ່ງອອກເປັນ ສອງ ປະເພດ ຄື : ສື່ສິ່ງພິມ ແລະ ສື່ເອເລັກໂຕຣນິກ ທີ່ເຮັດເປັນ ພາສາລາວ, ພາສາຊົນ ເຜົ່າ ແລະ ພາສາຕ່າງປະເທດ.

**ມາດຕາ 7. ສື່ສິ່ງພິມ**

ສື່ສິ່ງພິມ ແມ່ນ ພາຫະນະໂຄສະນາ ທີ່ເປັນແຜ່ນເຈ້ຍ ຊຶ່ງບັນຈຸ ຂໍ້ມູນຂ່າວສານດ້ວຍຕົວໜັງສື ຫລື ຮູບພາບ ໂດຍມີ ຊື່ສະເພາະ.

ສື່ສິ່ງພິມ ອາດຈະຈຳໜ່າຍເປັນລາຍວັນ ຫລື ເປັນໄລ ຍະ ຊຶ່ງປະກອບດ້ວຍ ໜັງສືພິມ, ວາລະສານ, ໃບຂ່າວສານ, ຈົດໝາຍເຫດ.

### ມາດຕາ 8. ສື່ເອເລັກໂຕຣນິກ

ສື່ເອເລັກໂຕຣນິກ ແມ່ນ ພາຫະນະໂຄສະນາ ດ້ວຍການສ້າງເປັນລາຍການວິທະຍຸ, ລາຍການໂທລະພາບ ຫລື ລາຍການອິນເຕີເນັດປະເພດຕ່າງໆ ແລ້ວກະຈາຍອອກຜ່ານເຄື່ອງສົ່ງທາງສາຍ, ທາງ ອາກາດ ຫລື ຄື້ນຄວາມຖີ່.

ສື່ເອເລັກໂຕຣນິກ ປະກອບດ້ວຍ ວິທະຍຸກະຈາຍສຽງ, ໂທລະພາບ, ໂທລະໂຄ່ງ ແລະ ອິນເຕີເນັດ.

### ມາດຕາ 9. ລັກສະນະຂອງສື່ມວນຊົນລາວ

ສື່ມວນຊົນລາວ ມີ ລັກສະນະພື້ນຕໍ່ ດັ່ງນີ້:

1. ລັກສະນະຕົວຈິງ;
2. ລັກສະນະສຶກສາອົບຮົມ;
3. ລັກສະນະຈັດຕັ້ງຊີ້ນຳ;
4. ລັກສະນະຕໍ່ສູ້.

### ມາດຕາ 10. ລັກສະນະຕົວຈິງ

ເນື້ອໃນ ແລະ ຮູບການ ຂອງສື່ມວນຊົນລາວທຸກປະເພດ ຕ້ອງພາວະວິໄສ, ຖືກຕ້ອງຕາມຄວາມເປັນຈິງ, ຊັດເຈນ, ວ່ອງໄວທັນການ ແລະ ສອດຄ່ອງກັບສິດຜົນປະໂຫຍດຂອງຊາດ ແລະ ປະຊາຊົນ.

### ມາດຕາ 11. ລັກສະນະສຶກສາອົບຮົມ

ເນື້ອໃນ ແລະ ຮູບການ ຂອງສື່ມວນຊົນລາວທຸກປະເພດ ຕ້ອງແນໃສ່ ສຶກສາອົບຮົມ, ໂຄສະ ນາ, ເຜີຍແຜ່ ແນວທາງນະໂຍບາຍຂອງພັກ, ລະບຽບກົດໝາຍຂອງລັດ , ຄວາມຮູ້ດ້ານຕ່າງໆ, ສິ່ງເສີມວຽກດີຄົນເດັ່ນ, ປຸກລະດົມນ້ຳໃຈຮັກຊາດ, ເຕົ້າໂຮມຄວາມສາມັກຄີເປັນປຶກແຜ່ນຂອງທົ່ວປວງຊົນ, ເສີມຂະຫຍາຍ ມູນເຊື້ອອັນດີງາມຂອງຊາດ ໃນການປົກປັກຮັກສາ ແລະ ສ້າງສາພັດທະນາປະ ເທດຊາດ.

## ມາດຕາ 12. ລັກສະນະຈັດຕັ້ງຊີ້ນຳ

ເນື້ອໃນ ແລະ ຮູບການ ຂອງສື່ມວນຊົນລາວທຸກປະເພດ ຕ້ອງແນໃສ່ ປຸກລະດົມ, ຈັດຕັ້ງ, ຊີ້ນຳ ມະຫາຊົນປະຕິບັດ ແນວທາງນະໂຍບາຍຂອງພັກ, ລະບຽບກົດໝາຍຂອງລັດ, ແຜນພັດທະນາເສດ ຖະກິດ- ສັງຄົມ ແລະ ແນະນຳ, ອະທິບາຍ, ໃຫ້ຄວາມກະຈ່າງແຈ້ງຕໍ່ທາງສຽງສັງຄົມ ຢ່າງຖືກຕ້ອງ.

## ມາດຕາ 13. ລັກສະນະຕໍ່ສູ້

ເນື້ອໃນ ແລະ ຮູບການ ຂອງສື່ມວນຊົນລາວທຸກປະເພດ ຕ້ອງປົກປ້ອງ ຄວາມຖືກຕ້ອງຂອງ ແນວທາງນະໂຍບາຍຂອງພັກ, ລະບຽບກົດໝາຍຂອງລັດ, ຕຳນິວິຈານປາກົດການລະເມີດລະບຽບກົດໝາຍ, ສິ່ງຫຍໍ້ທໍ້ໃນສັງຄົມ ແລະ ຕອບຕ້ານຖ້ອຍຫຳນອງທີ່ບິດເບືອນ, ໃສ່ຮ້າຍປ້າຍສີ ທີ່ສ້າງຄວາມເສື່ອມເສຍ ຕໍ່ ກຽດສັກສີ, ຜົນປະໂຫຍດຂອງຊາດ ແລະ ປະຊາຊົນ.

## ໝວດທີ III
## ສິດເສລີພາບຂອງພົນລະເມືອງລາວ ດ້ານສື່ມວນຊົນ

**ມາດຕາ 14. ສິດເສລີພາບຂອງພົນລະເມືອງລາວດ້ານສື່ມວນຊົນ**

ພົນລະເມືອງລາວ ມີສິດເສລີພາບດ້ານສື່ມວນຊົນ ດ້ວຍການປະກອບຄຳຄິດຄຳເຫັນ, ສະແດງທັດສະນະ ທີ່ບໍ່ຂັດກັບລະບຽບກົດໝາຍ, ສິດຜົນປະໂຫຍດຂອງຊາດ, ຂອງປະຊາຊົນ ແລະ ການໄດ້ຮັບຂໍ້ມູນຂ່າວສານ ກ່ຽວກັບສະພາບການພາຍໃນ ແລະ ຕ່າງປະເທດ, ສາລະຄວາມຮູ້, ສາລະບັນເທີງ ແລະ ບັນຫາອື່ນໆທີ່ເປັນຜົນປະໂຫຍດ.

**ມາດຕາ 15. ສິດເສລີພາບຂອງພົນລະເມືອງລາວໃນການປະກອບຄຳຄິດຄຳເຫັນ**

ພົນລະເມືອງລາວ ມີສິດເສລີພາບໃນການປະກອບຄຳຄິດຄຳເຫັນ ຜ່ານສື່ມວນຊົນ ກ່ຽວກັບ :

1. ການສ້າງ ແລະ ຈັດຕັ້ງປະຕິບັດ ແນວທາງນະໂຍບາຍຂອງພັກ, ລະບຽບກົດໝາຍຂອງລັດ, ແຜນພັດທະນາເສດຖະກິດ - ສັງຄົມ ແລະ ແຜນງົບປະມານແຫ່ງລັດ;
2. ທັດສະນະ ຕໍ່ສະພາບການພາຍໃນ ແລະ ຕ່າງປະເທດ;

3. ການຕຳນິຕິຊົມ ແບບສ້າງສັນ ຕໍ່ບຸກຄົນ ແລະ ການຈັດຕັ້ງ.

**ມາດຕາ 16. ສິດເສລີພາບຂອງພົນລະເມືອງລາວກ່ຽວກັບຂໍ້ມູນຂ່າວສານ**

ພົນລະເມືອງລາວ ມີສິດເສລີພາບ ກ່ຽວກັບຂໍ້ມູນຂ່າວສານ ຜ່ານສື່ມວນຊົນ ດັ່ງນີ້:

1. ເຂົ້າເຖິງ ແລະ ໄດ້ຮັບ ຂໍ້ມູນຂ່າວສານ ກ່ຽວກັບສະພາບການພາຍໃນ ແລະ ຕ່າງປະເທດ, ສາລະຄວາມຮູ້, ສາລະບັນເທີງ ແລະ ອື່ນໆ ;
2. ສະໜອງຂໍ້ມູນຂ່າວສານໃຫ້ສື່ມວນຊົນ ຢ່າງຖືກຕ້ອງ, ຊັດເຈນ, ທັນການ ແລະ ຮັບຜິດຊອບຕໍ່ໜ້າກົດໝາຍ ກ່ຽວກັບເນື້ອໃນຂໍ້ມູນຂ່າວສານນັ້ນ.

**ມາດຕາ 17. ການປະຕິບັດສິດເສລີພາບຂອງພົນລະເມືອງລາວ**

ພົນລະເມືອງລາວ ໄດ້ຮັບການປະຕິບັດສິດເສລີພາບຂອງຕົນ ຜ່ານສື່ມວນຊົນ ດ້ວຍການລົງພິມ ຫລື ກະຈາຍຂ່າວ, ບົດ, ຄຳເຫັນ, ກະຈາຍພາບ, ຕອບຂໍ້ສະເໜີ, ຂໍ້ຂ້ອງໃຈຂອງຕົນ ໂດຍສື່ມວນ ຊົນເອງ ຫລື ການຈັດຕັ້ງ ແລະ ບຸກຄົນທີ່ກ່ຽວຂ້ອງ. ໃນກໍລະນີທີ່ບໍ່ສາມາດ ລົງພິມ, ກະຈາຍ ຫລື ຕອບໄດ້

ນັ້ນ ສື່ມວນຊົນ ຕ້ອງແຈ້ງເຫດຜົນໃຫ້ພົນລະເມືອງ ຮັບຊາບຢ່າງເປັນທາງການ.

## ໝວດທີ IV
## ວຽກງານສື່ມວນຊົນ

### ມາດຕາ 18. ວຽກງານສື່ມວນຊົນ

ສື່ມວນຊົນ ມີວຽກງານຕົ້ນຕໍ ດັ່ງນີ້ :

1. ການຊອກຮູ້, ເກັບກຳຂໍ້ມູນຂ່າວສານ ;
2. ການໄດ້ຮັບການສະໜອງຂໍ້ມູນຂ່າວສານຈາກສັງຄົມ ;
3. ການເຜີຍແຜ່ ບົດ, ຂ່າວ ແລະ ແຈ້ງການຕ່າງໆ;
4. ການໃຫ້ຄຳຕອບ;
5. ການແກ້ຂ່າວ;
6. ການບໍລິການ;
7. ການບັນເທີງ.

### ມາດຕາ 19. ການຊອກຮູ້, ເກັບກຳຂໍ້ມູນຂ່າວສານ

ສື່ມວນຊົນ ຕ້ອງເຄື່ອນໄຫວຊອກຮູ້, ເກັບກຳຂໍ້ມູນຂ່າວສານ ຢ່າງກວ້າງຂວາງ, ຄົບຖ້ວນ, ຊັດເຈນ, ວ່ອງໄວ ແລະ ທັນການ ເພື່ອຄົ້ນຄວ້າ, ແຕ່ງເປັນ ບົດ, ຂ່າວ ແລະ ແຈ້ງການຕ່າງໆ.

### ມາດຕາ 20. ການໄດ້ຮັບການສະໜອງຂໍ້ມູນຂ່າວສານຈາກສັງຄົມ

ສື່ມວນຊົນ ມີສິດໄດ້ຮັບຂໍ້ມູນຂ່າວສານຈາກການຈັດຕັ້ງ ແລະ ບຸກຄົນ ເພື່ອພິຈາລະນາອອກຂ່າວ ຕາມຄວາມເໝາະສົມ.

ໃນກໍລະນີທີ່ໄດ້ຮັບຂໍ້ມູນຂ່າວສານ ກ່ຽວກັບການລະເມີດລະບຽບກົດໝາຍ ແລະ ປາກົດການຫຍໍ້ທໍ້ໃນສັງຄົມ ສື່ມວນຊົນ ກໍສາມາດແຈ້ງໃຫ້ການຈັດຕັ້ງ ຫລື ບຸກຄົນ ທີ່ກ່ຽວຂ້ອງຊາບເພື່ອພິຈາລະນາ.

ສໍາລັບຂ່າວກ່ຽວກັບຄະດີທີ່ພວມສືບສວນ-ສອບສວນ ຫລື ຄະດີ ທີ່ຍັງບໍ່ທັນຕັດສິນນັ້ນ ອົງການ ທີ່ດໍາເນີນຄະດີ ມີສິດສະຫງວນຄວາມລັບກ່ຽວກັບຂໍ້ມູນຂ່າວສານຕໍ່ສື່ມວນຊົນ, ແຕ່ສື່ມວນຊົນ ກໍມີສິດ ອອກຂ່າວ ຕາມແຫລ່ງຂ່າວທີ່ໜ້າເຊື່ອຖືໄດ້ ແລະ ເປັນປະໂຫຍດໃຫ້ແກ່ສັງຄົມ ດ້ວຍຄວາມຮັບຜິດຊອບຂອງຕົນຕໍ່ໜ້າກົດໝາຍ ເວັ້ນເສຍແຕ່ມີ ຄໍາສັ່ງຫ້າມ ຫລື ໂຈະ ການອອກຂ່າວຈາກອົງການທີ່ ກ່ຽວຂ້ອງ.

ສື່ມວນຊົນ ຈະບໍ່ເປີດເຜີຍຊື່ຂອງຜູ້ສະໜອງຂໍ້ມູນຂ່າວສານ ຖ້າເຫັນວ່າມີຜົນເສຍຫາຍຕໍ່ຜູ້ສະ ໜອງຂໍ້ມູນຂ່າວສານນັ້ນ ເວັ້ນເສຍແຕ່ຈະສະໜອງໃຫ້ຕາມການສະເໜີ ຂອງອົງການສືບສວນ-ສອບສວນ ຫລື ອົງການໄອຍະການປະຊາຊົນ ຫລື ສານປະຊາຊົນ.

### ມາດຕາ 21. ການເຜີຍແຜ່ ບົດ, ຂ່າວ ແລະ ແຈ້ງການຕ່າງໆ

ເມື່ອສື່ມວນຊົນ ໄດ້ເກັບກຳຂໍ້ມູນຂ່າວສານ ຫລື ຮັບຂໍ້ມູນຂ່າວສານຈາກສັງຄົມແລ້ວ ຕ້ອງຄົ້ນ ຄວ້າພິຈາລະນາຢ່າງຖີ່ຖ້ວນ ຖ້າເຫັນວ່າເປັນຜົນປະໂຫຍດໃຫ້ແກ່ປະເທດຊາດ ແລະ ສັງຄົມ ຈຶ່ງແຕ່ງ ເປັນບົດ, ຂ່າວ, ແຈ້ງການ ແລະ ລາຍການຕ່າງໆ ເພື່ອເຜີຍແຜ່ໃຫ້ສັງຄົມຮັບຮູ້ຢ່າງທົ່ວເຖິງ ແລະ ທັນເວລາ ຜ່ານພາຫະນະຂອງຕົນ.

### ມາດຕາ 22. ການໃຫ້ຄຳຕອບ

ສື່ມວນຊົນ ມີສິດສະເໜີໃຫ້ການຈັດຕັ້ງ ຫລື ບຸກຄົນທີ່ກ່ຽວຂ້ອງຕອບບັນຫາ ທີ່ພົນລະເມືອງ ລາວ ຫລື ອົງການຈັດຕັ້ງຕ່າງໆ ຂໍຄວາມກະຈ່າງແຈ້ງ, ເມື່ອການຈັດຕັ້ງ ຫລື ບຸກຄົນໄດ້ຮັບຄຳສະເໜີດັ່ງກ່າວແລ້ວ ກໍຕ້ອງຕອບຢ່າງທັນການ ແລະ ມີຄວາມຮັບຜິດຊອບຕໍ່ຄຳຕອບຂອງຕົນ.

ພົນລະເມືອງລາວ ຫລື ອົງການຈັດຕັ້ງຕ່າງໆ ມີສິດສະເໜີໃຫ້ສື່ມວນຊົນ ຊີ້ແຈງ ກ່ຽວກັບຂ່າວ ທີ່ໄດ້ ເຜີຍແຜ່ອອກໄປ ທີ່ຍັງບໍ່ຈະແຈ້ງນັ້ນ ແລະ ສື່ມວນຊົນ ຕ້ອງໃຫ້ຄຳຕອບຢ່າງວ່ອງໄວ.

### ມາດຕາ 23. ການແກ້ຂ່າວ

ການຈັດຕັ້ງ ຫລື ບຸກຄົນ ມີສິດສະເໜີໃຫ້ສື່ມວນຊົນແກ້ຂ່າວ ທີ່ອອກບໍ່ຖືກຄວາມຈິງ.

ອົງການສື່ມວນຊົນ ທີ່ອອກຂ່າວບໍ່ຖືກຄວາມຈິງ, ຂາດຫລັກຖານ, ແຕະຕ້ອງເຖິງປົດບາດ, ກຽດສັກສີຂອງການຈັດຕັ້ງ ຫລື ບຸກຄົນນັ້ນ ຕ້ອງໄດ້ແກ້ຂ່າວ ແລະ ຂໍໂທດ ຜ່ານສື່ມວນຊົນຕາມລະບຽບກົດໝາຍ.

ໃນກໍລະນີທີ່ ອົງການສື່ມວນຊົນບໍ່ແກ້ຂ່າວ ຫລື ໄດ້ແກ້ຂ່າວ ຢ່າງບໍ່ເໝາະສົມແລ້ວ ການຈັດຕັ້ງ ຫລື ບຸກຄົນ ທີ່ກ່ຽວຂ້ອງນັ້ນ ມີສິດສະເໜີຕໍ່ອົງການຄຸ້ມຄອງສື່ມວນຊົນ ຫລື ຮ້ອງຟ້ອງຕໍ່ສານປະຊາຊົນ ເມື່ອເຫັນວ່າມີຄວາມເສຍຫາຍເກີດຂຶ້ນ.

## ມາດຕາ 24. ການບໍລິການ

ການບໍລິການຂອງສື່ມວນຊົນ ແມ່ນການທີ່ສື່ມວນຊົນໂຄສະນາສິນຄ້າ ຫລື ບໍລິການ ໃຫ້ລູກຄ້າ ໂດຍເກັບຄ່າບໍລິການ.

ສື່ມວນຊົນທຸກປະເພດ ສາມາດໂຄສະນາ ສິນຄ້າ ຫລື ບໍລິການ ໃຫ້ລູກຄ້າ ແຕ່ຕ້ອງໄດ້ຮັບອະນຸຍາດ ຈາກອົງການຄຸ້ມຄອງສື່ມວນຊົນທີ່ກ່ຽວຂ້ອງ.

ເນື້ອໃນໂຄສະນາ ສິນຄ້າ ຫລື ການບໍລິການ ຜ່ານສື່ມວນຊົນທຸກປະເພດ ຕ້ອງໃຫ້ຖືກກັບຄວາມເປັນຈິງ, ບໍ່ເວົ້າໂຍກ, ເວົ້າເກີນ ຄຸນນະພາບຂອງສິນຄ້າ ຫລື ຂອງການບໍລິການນັ້ນ ແລະ ຕ້ອງໄດ້ຮັບອະນຸຍາດ ຈາກອົງການຄຸ້ມຄອງວຽກງານທີ່ກ່ຽວຂ້ອງ.

ການໂຄສະນາ ສິນຄ້າ ຫລື ບໍລິການ ໃຫ້ລູກຄ້າ ຜ່ານສື່ມວນຊົນ ລວມທັງ ການເກັບຄ່າບໍລິ ການນັ້ນ ໄດ້ກໍານົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 25. ການບັນເທີງ**

ການບັນເທີງ ເປັນວຽກງານໜຶ່ງຂອງສື່ມວນຊົນ ເພື່ອສ້າງບັນຍາກາດ, ຄວາມເບີກບານມ່ວນຊື່ນໃຫ້ແກ່ສັງຄົມ ທັງເປັນການໂຄສະນາ, ສຶກສາອົບຮົມ, ແນະນໍາ, ປຸກລະດົມ ພົນລະເມືອງໃຫ້ມີຄວາມຕື່ນຕົວ ເປັນເຈົ້າການເຂົ້າຮ່ວມໃນການປົກປັກຮັກສາ ແລະ ພັດທະນາ ປະເທດຊາດ.

ການບັນເທີງທີ່ນໍາອອກຜ່ານສື່ມວນຊົນນັ້ນ ປະກອບດ້ວຍ ການສະແດງສິນລະປະວັນນະຄະດີ, ການຮ້ອງເພງ, ການຂັບ, ການລໍາ, ການບັນເລງສຽງດົນຕີ, ການສະແດງລະຄອນ, ການກິລາກາຍະກໍາ, ວັນນະກໍາ ແລະ ອື່ນໆ ທີ່ສອດຄ່ອງກັບແນວທາງນະໂຍບາຍຂອງພັກ, ລະບຽບກົດ ໝາຍຂອງລັດ, ຮີດຄອງ, ວັດທະນະທໍາ ປະເພນີອັນດີງາມຂອງຊາດ, ຂອງຊົນເຜົ່າ ແລະ ສາມາດເຊື່ອມໂຍງກັບ ພາກພື້ນ ແລະ ສາກົນ.

## ໝວດທີ V
## ການຈັດຕັ້ງ ແລະ ບຸກຄະລາກອນຂອງສື່ມວນຊົນ

**ມາດຕາ 26. ການຈັດຕັ້ງຂອງສື່ມວນຊົນ**

ການຈັດຕັ້ງຂອງສື່ມວນຊົນ ປະກອບດ້ວຍ:

- ເຈົ້າຂອງອົງການສື່ມວນຊົນ;
- ອົງການສື່ມວນຊົນ;
- ສະມາຄົມນັກຂ່າວແຫ່ງ ສ ປ ປ ລາວ.

**ມາດຕາ 27. ເຈົ້າຂອງອົງການສື່ມວນຊົນ**

ເຈົ້າຂອງອົງການສື່ມວນຊົນ ແມ່ນ ອົງການຈັດຕັ້ງພັກ, ລັດ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ, ການຈັດຕັ້ງ ແລະ ບຸກຄົນ ທີ່ໄດ້ຮັບອະນຸມັດໃຫ້ສ້າງຕັ້ງອົງການສື່ມວນຊົນ ແລະ ດຳເນີນວຽກງານ ດ້ານສື່ມວນຊົນ ຕາມລະບຽບກົດໝາຍ.

**ມາດຕາ 28. ໜ້າທີ່ ແລະ ສິດ ຂອງເຈົ້າຂອງອົງການສື່ມວນຊົນ**

ເຈົ້າຂອງອົງການສື່ມວນຊົນ ມີໜ້າທີ່ຕົ້ນຕໍ ດັ່ງນີ້:

1. ກຳນົດ ທິດທາງ, ຈຸດປະສົງ, ເປົ້າໝາຍຮັບໃຊ້, ຂອບເຂດ ການພິມ ແລະ ຈຳໜ່າຍສື່ສິ່ງພິມ ຫລື ຄວາມແຮງຂອງເຄື່ອງສົ່ງ, ຄື້ນຄວາມຖີ່, ເວລາການກະຈາຍ, ຂອບເຂດ ການ ກະຈາຍພາບ, ສຽງ ແລະ ພາສາ;
2. ຈັດຕັ້ງກົງຈັກຊ່ວຍວຽກ, ສ້າງບຸກຄະລາກອນ ແລະ ຊີ້ນຳ, ຄຸ້ມຄອງ, ກວດກາ ການປະຕິບັດພາລະບົດ

ບາດ, ໜ້າທີ່, ສິດ, ທິດທາງ, ແຜນການ ແລະ ການເຄື່ອນໄຫວຂອງອົງການສີ່ມວນຊົນ ຂອງຕົນ;

3. ສ້າງເງື່ອນໄຂ ແລະ ອຳນວຍຄວາມສະດວກ ໃຫ້ແກ່ການເຄື່ອນໄຫວຂອງອົງການສີ່ ມວນຊົນ ຂອງຕົນ;

4. ຮັບຜິດຊອບຕໍ່ກົດໝາຍ ຕາມພາລະບົດບາດ, ໜ້າທີ່ ແລະ ສິດ ຂອງຕົນ ໃນວຽກງານສີ່ ມວນຊົນ.

**ເຈົ້າຂອງອົງການສື່ມວນຊົນ ມີສິດຕົ້ນຕໍ ດັ່ງນີ້:**

1. ສະເໜີ ສ້າງຕັ້ງ ແລະ ຍຸບເລີກ ອົງການສື່ມວນຊົນ ຂອງຕົນ;
2. ຕົກລົງທິດທາງ, ແຜນການ ແລະ ການເຄື່ອນໄຫວຂອງອົງການສື່ມວນຊົນ ຂອງຕົນ;
3. ແຕ່ງຕັ້ງ ຫລື ປົດຕຳແໜ່ງຫົວໜ້າ ຫລື ຮອງຫົວໜ້າ ອົງການສື່ມວນຊົນຂອງຕົນ ຕາມລະບຽບການ ;
4. ຕິດຕາມ, ກວດກາການເຄື່ອນໄຫວຂອງອົງການ ສື່ມວນຊົນຂອງຕົນ;
5. ເຂົ້າຮ່ວມກອງປະຊຸມກ່ຽວກັບວຽກງານສື່ມວນຊົນ ຢູ່ພາຍໃນ ແລະ ຕ່າງປະເທດ ຕາມການມອບໝາຍ;
6. ພົວພັນ ແລະ ຮ່ວມມືສາກົນ ດ້ານສື່ມວນຊົນ ຕາມລະບຽບກົດໝາຍ.

**ມາດຕາ 29. ອົງການສື່ມວນຊົນ**

ອົງການສື່ມວນຊົນ ແມ່ນ ການຈັດຕັ້ງໜຶ່ງ ຂອງເຈົ້າ

ຂອງອົງການສື່ມວນຊົນ ທີ່ດຳເນີນວຽກ ງານດ້ານສື່ມວນຊົນ ປະເພດໃດໜຶ່ງ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 6 ຂອງກົດ ໝາຍ ສະບັບນີ້.

**ມາດຕາ 30. ໜ້າທີ່ ແລະ ສິດ ຂອງອົງການສື່ມວນຊົນ**

ອົງການສື່ມວນຊົນ ມີໜ້າທີ່ຕົ້ນຕໍ ດັ່ງນີ້:

1. ໂຄສະນາ, ເຜີຍແຜ່, ປົກປ້ອງແນວທາງ, ແຜນ ນະໂຍບາຍ, ນະໂຍບາຍ, ລະບຽບກົດໝາຍ ແລະ ປະກອບສ່ວນຮັກສາສະຖຽນລະພາບ ທາງດ້ານການເມືອງ, ເສດຖະກິດ ແລະ ສັງຄົມ, ປົກປັກຮັກສາ ແລະ ເສີມຂະຫຍາຍມູນເຊື້ອ ຮັກຊາດ, ຄວາມສາມັກຄີ ເປັນປຶກແຜ່ນຂອງ ວົງຄະນະຍາດແຫ່ງຊາດ;
2. ເຜີຍແຜ່ ຂໍ້ມູນຂ່າວສານທາງດ້ານ ວິທະຍາ ສາດ, ເຕັກນິກ, ເຕັກໂນໂລຊີ, ໃຫ້ສາລະ ຄວາມ ຮູ້, ສາລະບັນເທີງ, ສົ່ງເສີມການສຶກສາ ເພື່ອຍົກ ລະດັບຄວາມຮູ້ຂອງປະຊາຊົນ, ເສີມຂະຫຍາຍ ວັດທະນະທຳ, ຮີດຄອງປະເພນີອັນດີງາມ ຂອງປະຊາຊົນບັນດາເຜົ່າ, ສົ່ງເສີມບົດບາດ ຍິງ- ຊາຍ, ປົກປ້ອງສິດ ແລະ ຜົນປະໂຫຍດ ຂອງແມ່ຍິງ ແລະ ເດັກ ນ້ອຍ ;

3. ເຜີຍແຜ່ວຽກດີຄົນເດັ່ນ ແລະ ແນະນຳທາງສຽງສັງຄົມ;
4. ຮັກສາຄວາມຖືກຕ້ອງ ຂອງພາສາລາວ ແລະ ພາສາຊົນເຜົ່າໃນ ສ ປ ປ ລາວ ;
5. ສົ່ງເສີມການພົວພັນ, ການຮ່ວມມື, ຄວາມເຂົ້າໃຈເຊິ່ງກັນ ແລະ ກັນ ລະຫວ່າງປະເທດເພື່ອນມິດ ແລະ ປະຊາຊາດ, ປະກອບສ່ວນເຂົ້າໃນພາລະກິດຕໍ່ສູ້ ຂອງບັນດາປະຊາ ຊາດ ເພື່ອສັນຕິພາບ, ເອກະລາດ ແຫ່ງຊາດ, ປະຊາທິປະໄຕ ແລະ ຄວາມກ້າວໜ້າ ທາງສັງຄົມ;
6. ດຳເນີນກິດຈະການ ການພິມ ແລະ ຈຳໜ່າຍສິ່ງພິມ, ການກະຈາຍພາບ, ສຽງ ແລະ ພາສາ ຕາມທີ່ ໄດ້ກຳນົດໄວ້ໃນໃບອະນຸມັດສ້າງຕັ້ງ;
7. ຄຸ້ມຄອງກິ່ງຈັກຊ່ວຍວຽກ, ສ້າງບຸກຄະລາກອນ ແລະ ປະຕິບັດ ພາລະບົດບາດ, ໜ້າທີ່, ສິດ, ທິດທາງ, ແຜນການເຄື່ອນໄຫວ ຂອງຕົນ, ລາຍງານຜົນການເຄື່ອນໄຫວວຽກງານ ໃຫ້ເຈົ້າຂອງອົງການສື່ມວນຊົນ ແລະ ອົງການຄຸ້ມຄອງສື່ມວນຊົນ ຢ່າງເປັນປົກກະຕິ;
8. ຮັບປະກັນການປະຕິບັດສິດເສລີພາບດ້ານສື່ມວນຊົນຂອງພົນລະເມືອງລາວ;

9. ຮັບຜິດຊອບຕໍ່ກົດໝາຍ ແລະ ຕໍ່ເຈົ້າຂອງອົງການສື່ມວນຊົນກ່ຽວກັບການເຄື່ອນໄຫວວຽກງານຂອງຕົນ.

**ອົງການສື່ມວນຊົນ ມີສິດຕົ້ນຕໍ ດັ່ງນີ້:**

1. ອອກຂ່າວຢ່າງຖືກຕ້ອງກັບຄວາມເປັນຈິງ ກ່ຽວກັບສະພາບການພາຍໃນ ແລະ ຕ່າງປະເທດ ທີ່ມີຜົນປະໂຫຍດຕໍ່ຊາດ ແລະ ປະຊາຊົນ;
2. ຕໍານິຕິຊົມແບບສ້າງສັນ ຕໍ່ການກະທໍາທີ່ເປັນການລະເມີດລະບຽບກົດໝາຍ, ປາກົດການຫຍໍ້ທໍ້ ໃນສັງຄົມ ເຊັ່ນ : ການສໍ້ລາດບັງຫລວງ, ຢາເສບຕິດ ;
3. ຕອບໂຕ້ທຸກຖ້ອຍຄໍານອງໂຄສະນາໃສ່ຮ້າຍປ້າຍສີ, ບິດເບືອນຄວາມຈິງ ທີ່ສ້າງຄວາມເສື່ອມເສຍໃຫ້ແກ່ຜົນປະໂຫຍດຂອງຊາດ ແລະ ປະຊາຊົນ;
4. ພັດທະນາຕົນ ໃຫ້ມີຄວາມເຂັ້ມແຂງ, ກ້າວໜ້າ ແລະ ທັນສະໄໝ;
5. ພິຈາລະນາ ເນື້ອໃນ, ຮູບການ ຂອງຜະລິດຕະພັນສື່ມວນຊົນຂອງຕົນ;
6. ສະເໜີ, ປະກອບຄໍາຄິດຄໍາເຫັນຕໍ່ຂັ້ນເທິງ ກ່ຽວ

ກັບການເຄື່ອນໄຫວວຽກງານສື່ມວນຊົນຂອງ
ຕົນ ;

7. ໄດ້ຮັບການປົກປ້ອງຈາກກົດໝາຍໃນການເຄື່ອນໄຫວວຽກງານທີ່ຖືກຕ້ອງຂອງຕົນ ;

8. ສ້າງບັນຍາກາດ, ຄວາມເບີກບານມ່ວນຊື່ນ ໃຫ້ແກ່ສັງຄົມ;

9. ເຂົ້າຮ່ວມກອງປະຊຸມ ກ່ຽວກັບວຽກງານສື່ມວນຊົນ ຢູ່ພາຍໃນ ແລະ ຕ່າງປະເທດ ຕາມການມອບໝາຍ ;

10. ພົວພັນ ແລະ ຮ່ວມມືກັບສາກົນຕາມການເຫັນດີຂອງເຈົ້າຂອງອົງການສື່ມວນຊົນ ແລະ ຕາມລະບຽບກົດໝາຍ.

**ມາດຕາ 31. ສະມາຄົມນັກຂ່າວແຫ່ງ ສ ປ ປ ລາວ**

ສະມາຄົມນັກຂ່າວ ແຫ່ງ ສ ປ ປ ລາວ ແມ່ນ ອົງການຈັດຕັ້ງການເມືອງ, ສັງຄົມ, ວິຊາຊີບຂອງຜູ້ເຮັດວຽກງານດ້ານສື່ມວນຊົນ ຊຶ່ງມີພາລະບົດບາດສຶກສາອົບຮົມ, ເຕົ້າໂຮມຄວາມສາມັກຄີ ແລະ ມີໜ້າທີ່ປົກປ້ອງສິດຜົນປະໂຫຍດອັນຊອບທຳ ຂອງສະມາຊິກຂອງຕົນ ແລະ ຜູ້ເຮັດວຽກງານດ້ານສື່ມວນຊົນ, ເຂົ້າຮ່ວມໃນການປະຕິບັດແນວທາງ, ນະໂຍບາຍຂອງພັກ, ລະບຽບກົດໝາຍຂອງລັດ ແລະ ນະໂຍບາຍສື່ມວນຊົນ.

ໜ້າທີ່ ແລະ ສິດ ຂອງສະມາຄົມນັກຂ່າວ ແຫ່ງ ສ ປ ປ ລາວ ໄດ້ກຳນົດໄວ້ໃນກົດສະບຽບສະເພາະ.

**ມາດຕາ 32. ບຸກຄະລາກອນຂອງສື່ມວນຊົນ**

ບຸກຄະລາກອນຂອງສື່ມວນຊົນ ປະກອບດ້ວຍ ຫົວໜ້າ, ຮອງຫົວໜ້າອົງການສື່ມວນຊົນ, ນັກຂ່າວ, ນັກວິຊາການດ້ານສື່ມວນຊົນ ແລະ ຜູ້ຮ່ວມງານ.

**ມາດຕາ 33. ຫົວໜ້າ ແລະ ຮອງຫົວໜ້າຂອງອົງການສື່ມວນຊົນ**

ຫົວໜ້າ ແລະ ຮອງຫົວໜ້າ ອົງການສື່ມວນຊົນ:

- ປະເພດສື່ສິ່ງພິມ ເອີ້ນວ່າ : ຫົວໜ້າຄະນະບັນນາທິການ ແລະ ຮອງຫົວໜ້າຄະນະບັນນາ ທິການ;
- ປະເພດສື່ເອເລັກໂຕຣນິກ ເອີ້ນວ່າ : ຜູ້ອຳນວຍການ ແລະ ຮອງຜູ້ອຳນວຍການ.

ການແຕ່ງຕັ້ງ, ຍົກຍ້າຍ ຫລື ປົດຕຳແໜ່ງ ຫົວໜ້າ ແລະ ຮອງຫົວໜ້າອົງການສື່ມວນຊົນ ແມ່ນເຈົ້າຂອງອົງການສື່ມວນຊົນເປັນຜູ້ຕົກລົງ ໂດຍປະສານສົມທົບກັບອົງການຄຸ້ມຄອງສື່ມວນຊົນທີ່ກ່ຽວຂ້ອງ ຫລື ເປັນຜູ້ສະເໜີໃຫ້ອົງການທີ່ມີສິດກ່ຽວຂ້ອງພິຈາລະນາຕາມລະບຽບການ.

**ມາດຕາ 34. ມາດຕະຖານຂອງຫົວໜ້າ ແລະ ຮອງຫົວໜ້າຂອງອົງການສື່ມວນຊົນ**

ຫົວໜ້າ ແລະ ຮອງຫົວໜ້າອົງການສື່ມວນຊົນ ມີມາດຕະຖານ ຕົ້ນຕໍ ດັ່ງນີ້ :

1. ມີພູມລໍາເນົາຖາວອນຢູ່ ສ ປ ປ ລາວ ;
2. ມີສັນຊາດລາວ ແລະ ມີອາຍຸ ຊາວສາມ ປີຂຶ້ນໄປ ;
3. ມີປະກາສະນີຍະບັດຊັ້ນສູງຂຶ້ນໄປ, ມີປະສົບການ ດ້ານສື່ມວນຊົນ, ມີຄວາມສາມາດບໍລິຫານ ອົງການສື່ມວນຊົນ ;
4. ມີຄຸນສົມບັດສົນທໍາປະຕິວັດ, ຄຸນທາດການເມືອງໜັກແໜ້ນ;
5. ຮູ້ພາສາຕ່າງປະເທດໃດໜຶ່ງ;
6. ມີສຸຂະພາບແຂງແຮງ .

## ມາດຕາ 35. ໜ້າທີ່ ແລະ ສິດຂອງຫົວໜ້າ ແລະ ຮອງຫົວໜ້າ ຂອງອົງການສື່ມວນຊົນ

ຫົວໜ້າອົງການສື່ມວນຊົນ ເປັນຜູ້ຊີ້ນໍາ ແລະ ຄຸ້ມຄອງການເຄື່ອນໄຫວຂອງອົງການສື່ມວນຊົນຂອງຕົນ, ມີໜ້າທີ່ ແລະ ສິດ ພິຈາລະນາ ອະນຸມັດການລົງຂ່າວ, ບົດ ໃນ ສື່ສິ່ງພິມ, ລາຍການກະ ຈາຍ ສຽງ ແລະ ພາບ ທັງມີຄວາມຮັບຜິດຊອບຕໍ່ເຈົ້າຂອງອົງການສື່ມວນຊົນ ກ່ຽວກັບເນື້ອໃນໂຄສະ ນາ ແລະ ການເຄື່ອນໄຫວຂອງອົງການສື່ມວນຊົນທີ່ຕົນຮັບຜິດຊອບ.

ຮອງຫົວໜ້າອົງການສື່ມວນຊົນ ມີໜ້າທີ່ ແລະ ສິດ ຊ່ວຍຫົວໜ້າໃນວຽກງານໃດໜຶ່ງ ແລະ ຮັກສາການແທນ ໃນ

ເວລາຫົວໜ້າບໍ່ຢູ່ຕາມການມອບໝາຍຂອງຫົວໜ້າ

**ມາດຕາ 36. ມາດຕະຖານຂອງນັກຂ່າວລາວ**

ນັກຂ່າວລາວ ມີມາດຕະຖານພື້ນຕົ້ນ ດັ່ງນີ້ :

1. ມີພູມລຳເນົາຖາວອນ ຢູ່ ສ ປ ປ ລາວ ;
2. ມີສັນຊາດລາວ ແລະ ມີອາຍຸແຕ່ ສິບແປດ ປີຂຶ້ນໄປ ;
3. ມີຈັນຍາບັນຂອງນັກຂ່າວຢ່າງຄົບຖ້ວນ ;
4. ມີປະກາສະນີຍະບັດຊັ້ນກາງຂຶ້ນໄປ ຫລື ມີໃບຢັ້ງຢືນ, ມີຄວາມຮູ້, ມີປະສົບການ ແລະ ມີພອນສະຫວັນ ດ້ານສື່ມວນຊົນ;
5. ມີສຸຂະພາບດີ.

**ມາດຕາ 37. ໜ້າທີ່ ແລະ ສິດຂອງນັກຂ່າວ**

ນັກຂ່າວ ມີໜ້າທີ່ພື້ນຕົ້ນ ດັ່ງນີ້:

1. ຊອກຮູ້, ເກັບກຳຂໍ້ມູນ, ຂ່າວສານ ເພື່ອຂຽນເປັນຂ່າວ, ບົດ ແລະ ລາຍການໂຄສະນາ ເຜີຍແຜ່ຜ່ານສື່ມວນຊົນ ;
2. ຂຽນຂ່າວ, ບົດ ຢ່າງຖືກຕ້ອງ, ຊັດເຈນ ກ່ຽວກັບສະພາບການພາຍໃນ ແລະ ຕ່າງປະເທດ ໂດຍສອດຄ່ອງກັບສິດຜົນປະໂຫຍດຂອງຊາດ ແລະ ສ່ອງແສງເຖິງຄວາມມຸ່ງມາດ ປາຖະໜາອັນຊອບທຳຂອງປະຊາຊົນ ;

3. ເຜີຍແຜ່ ແນວທາງ, ນະໂຍບາຍ ແລະ ລະບຽບກົດໝາຍ; ຂຸດຄົ້ນ, ສົ່ງເສີມ ປັດໄຈທີ່ຕັ້ງໜ້າ, ຕໍ່ສູ້ຕ້ານບັນດາແນວຄິດ ແລະ ການກະທຳທີ່ລະເມີດລະບຽບກົດໝາຍ, ຕອບໂຕ້ ຖ້ອຍທຳນອງບິດເບືອນ ແລະ ໃສ່ຮ້າຍປ້າຍສີ ທີ່ສ້າງຄວາມເສື່ອມເສຍໃຫ້ແກ່ກຽດສັກສີ, ຜົນປະໂຫຍດຂອງຊາດ ແລະ ປະຊາຊົນ ;
4. ຄົ້ນຄວ້າ, ຮໍ່າຮຽນ, ຝຶກຝົນຫລໍ່ຫລອມ ຕົນເອງເພື່ອຍົກລະດັບທາງດ້ານການເມືອງ, ຄຸນ ສົມບັດ, ຈັນຍາບັນ, ວິຊາສະເພາະ, ພາສາຕ່າງປະເທດ ແລະ ອື່ນໆ;
5. ແກ້ຂ່າວ ແລະ ຂໍໂທດ ຜ່ານສື່ມວນຊົນ ໃນກໍລະນີທີ່ຂຽນຂ່າວຜິດພາດ ຫລື ບໍ່ມີມູນ ຄວາມຈິງ ;
6. ຮັບການຕຳນິຕິຊົມຈາກສັງຄົມ, ຮັບຜິດຊອບຕໍ່ກົດໝາຍ ແລະ ຕໍ່ອົງການສື່ມວນຊົນກ່ຽວກັບເນື້ອໃນຂ່າວ, ບົດ ແລະ ການກະທຳທີ່ບໍ່ຖືກຕ້ອງຂອງຕົນ.

**ນັກຂ່າວ ມີສິດຕົ້ນຕໍ ດັ່ງນີ້:**

1. ໄດ້ຮັບບັດນັກຂ່າວ, ສັງກັດ ແລະ ເຄື່ອນໄຫວຢູ່ໃນອົງການສື່ມວນຊົນໃດໜຶ່ງ ;
2. ປະຕິບັດວຽກງານດ້ານການຂ່າວຢູ່ພາຍໃນ ແລະ

ຕ່າງປະເທດ ຕາມການມອບໝາຍ;

3. ພົວພັນ, ຮ່ວມມືກັບຜູ້ຮ່ວມງານຢ່າງເປັນປົກກະຕິ, ຊອກຮູ້, ເກັບກຳ ແລະ ຮັບຂໍ້ມູນຂ່າວສານໃນວຽກງານສື່ມວນຊົນ ຕາມລະບຽບກົດໝາຍ;
4. ວິເຄາະ, ວິໄຈ, ຂຽນຂ່າວ, ບົດ, ຖ່າຍທຳຮູບພາບຕ່າງໆ, ສ້າງຜະລິດຕະພັນສື່ມວນຊົນ ທີ່ສ້າງສັນ ແລະ ມີຄຸນປະໂຫຍດ, ໃສ່ນາມປາກກາ ເປັນຊື່ຕົນເອງ ຫລື ຊື່ແຝງ;
5. ໄດ້ຮັບການບຳລຸງ, ຍົກລະດັບທາງດ້ານການເມືອງ, ວິຊາສະເພາະດ້ານສື່ມວນຊົນ, ຮັບ ນາມມະຍົດ, ເງິນອຸດໜູນ ຫລື ນະໂຍບາຍອື່ນ ;
6. ໄດ້ຮັບບູລິມະສິດໃນການເຄື່ອນໄຫວ ດ້ານວຽກງານສື່ມວນຊົນ ຕາມລະບຽບກົດໝາຍ;
7. ໄດ້ຮັບການປົກປ້ອງຈາກກົດໝາຍໃນການເຄື່ອນໄຫວປະຕິບັດໜ້າທີ່ວິຊາສະເພາະທີ່ຖືກຕ້ອງຂອງຕົນ.

### ມາດຕາ 38. ນັກວິຊາການດ້ານສື່ມວນຊົນ

ນັກວິຊາການດ້ານສື່ມວນຊົນ ແມ່ນ ບຸກຄະລາກອນທີ່ປະຕິບັດງານ ໃນອົງການສື່ມວນຊົນ ຊຶ່ງມີນັກປະພັນ, ນັກກະວີ, ໂຄສົກ, ພິທີກອນ, ຜູ້ຈັດລາຍການ, ຜູ້ກຳກັບການສະແດງ, ຜູ້ອອກແບບ ການພິມ, ນັກແຕ້ມ, ນັກປະດັບປະດາ,

ນາຍຊ່າງເຕັກນິກ ແລະ ນັກວິຊາການອື່ນທີ່ຮັບໃຊ້ການສ້າງ ຜະລິດຕະພັນ ສື່ມວນຊົນ ປະເພດຕ່າງ ໆ.

ໜ້າທີ່ ແລະ ສິດ ຂອງນັກວິຊາການດ້ານສື່ມວນຊົນ ໄດ້ກຳນົດໄວ້ໃນລະບຽບການສະເພາະ ຂອງແຕ່ລະອົງການສື່ມວນຊົນ.

## ມາດຕາ 39. ຜູ້ຮ່ວມງານ

ຜູ້ຮ່ວມງານ ແມ່ນ ຜູ້ທີ່ບໍ່ມີອາຊີບເປັນນັກຂ່າວ ແຕ່ເປັນຜູ້ຂຽນ ຂ່າວ, ບົດ, ຖ່າຍພາບ ສະໜອງ ໃຫ້ອົງການສື່ມວນຊົນ ຢ່າງເປັນປົກກະຕິ ໂດຍໄດ້ ຮັບຄ່າແຮງງານ ແລະ ນະໂຍບາຍອື່ນ ຈາກອົງການ ສື່ມວນຊົນ.

ໜ້າທີ່ ແລະ ສິດ ຂອງຜູ້ຮ່ວມງານ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

# ໝວດທີ VI
# ການສ້າງຕັ້ງ ແລະ ການເຄື່ອນໄຫວຂອງອົງການສື່ມວນຊົນ

## ມາດຕາ 40. ເງື່ອນໄຂການສ້າງຕັ້ງ ອົງການສື່ມວນຊົນ

ການສ້າງຕັ້ງ ອົງການສື່ມວນຊົນ ມີເງື່ອນໄຂ ດັ່ງນີ້:

1. ກຳນົດຊື່, ຈຸດປະສົງ, ເປົ້າໝາຍຮັບໃຊ້, ຂອບເຂດການພິມ ແລະ ຈຳໜ່າຍສິ່ງພິມ, ກຳລັງແຮງຂອງເຄື່ອງສົ່ງ, ກຳນົດເວລາການກະຈາຍ,

ຄົ້ນຄວາມຖີ່, ຂອບເຂດການ ກະຈາຍຄື້ນ ແລະ ພາສາທີ່ຈະນຳໃຊ້ຂອງອົງການສື່ມວນຊົນນັ້ນ;

2. ມີກົງຈັກການຈັດຕັ້ງ, ມີບຸກຄະລາກອນທີ່ມີມາດຕະຖານ ຕາມທີ່ໄດ້ກຳນົດໄວ້ໃນມາດ ຕາ 34, 36 ແລະ 38 ຂອງກົດໝາຍ ສະບັບນີ້;
3. ມີ ສຳນັກງານ, ພາຫະນະ, ອຸປະກອນເຕັກນິກ, ທຶນ ເພື່ອຮັບປະກັນໃຫ້ແກ່ການເຄື່ອນໄຫວວຽກງານຂອງຕົນ;
4. ໄດ້ຮັບອະນຸມັດຈາກອົງການຄຸ້ມຄອງສື່ມວນຊົນ ຕາມລະບຽບການ.

**ມາດຕາ 41. ການສ້າງຕັ້ງສຳນັກງານຜູ້ຕາງໜ້າອົງການສື່ມວນຊົນ**

ລັດຖະບານ ເປັນຜູ້ອະນຸມັດການສ້າງຕັ້ງສຳນັກງານຜູ້ຕາງໜ້າອົງການສື່ມວນຊົນລາວປະຈຳຢູ່ຕ່າງປະເທດ ແລະ ໃຫ້ອົງການສື່ມວນຊົນຕ່າງປະເທດເຂົ້າມາປະຈຳ ຫລື ສ້າງຕັ້ງສຳນັກງານຜູ້ຕາງ ໜ້າຂອງອົງການສື່ມວນຊົນ ຕ່າງປະເທດຢູ່ ສ ປ ປ ລາວ. ນັກຂ່າວ, ນັກວິຊາການດ້ານສື່ມວນຊົນ ແລະ ຄະນະຮັບຜິດຊອບອົງການສື່ມວນຊົນຕ່າງປະເທດທີ່ມາເຄື່ອນໄຫວ ຢູ່ ສປປ ລາວ ຕ້ອງປະຕິ ບັດຕາມລະບຽບກົດໝາຍຂອງ ສປປ ລາວ.

ລະບຽບການ ສ້າງຕັ້ງ ແລະ ເຄື່ອນໄຫວຂອງຜູ້ຕາງໜ້າອົງການສື່ມວນຊົນຂອງພາຍໃນ ແລະ ຕ່າງປະເທດ ໄດ້ກຳ

ນິດໄວ້ຕ່າງຫາກ.

**ມາດຕາ 42. ການພິມ ແລະ ຈຳໜ່າຍ ສື່ສິ່ງພິມ**

ການພິມສື່ສິ່ງພິມລາວ ແມ່ນ ໃຫ້ພິມຢູ່ ສ ປ ປ ລາວ ເປັນຕົ້ນຕໍ. ສື່ສິ່ງພິມໃດທີ່ຈະສົ່ງໄປພິມ ຫລື ຈຳໜ່າຍ ຢູ່ຕ່າງປະເທດ ຕ້ອງໄດ້ຮັບອະນຸຍາດຈາກອົງການຄຸ້ມຄອງສື່ມວນຊົນທີ່ກ່ຽວຂ້ອງ.

ອົງການສື່ມວນຊົນ ເປັນຜູ້ຈັດຕັ້ງການຈຳໜ່າຍສື່ສິ່ງພິມຂອງຕົນເອງ ຫລື ມອບສິດໃຫ້ແກ່ອົງການຈັດຕັ້ງ ຫລື ບຸກຄົນໃດໜຶ່ງ ຮັບຜິດຊອບການບໍລິການຈຳໜ່າຍແທນກໍໄດ້.

ອົງການຈັດຕັ້ງ ແລະ ບຸກຄົນ ທັງພາຍໃນ ແລະ ຕ່າງປະເທດ ທີ່ມີຈຸດປະສົງ ນຳເອົາສື່ສິ່ງພິມ ຕ່າງປະເທດ ເຂົ້າມາພິມ, ຈຳໜ່າຍ ຢູ່ ສ ປ ປ ລາວ ຕ້ອງຂໍອະນຸມັດ ຈາກອົງການຄຸ້ມຄອງສື່ມວນຊົນ ທີ່ກ່ຽວຂ້ອງ.

**ມາດຕາ 43. ການເພີ່ມໜ້າພິມຂອງສື່ສິ່ງພິມ**

ອົງການສື່ມວນຊົນທີ່ຕ້ອງການພິມ ແລະ ຈຳໜ່າຍສື່ສິ່ງພິມເພີ່ມ, ເພີ່ມຈຳນວນໜ້າ, ພິມສະບັບສອດໃນ ຫລື ຊ້ອນທ້າຍ, ພິມເພີ່ມໃບຂ່າວພິເສດ ສາມາດເຮັດໄດ້ ຕາມໜ້າທີ່ ແລະ ສິດຂອງຕົນ ແຕ່ ຕ້ອງໄດ້ຮັບອະນຸຍາດຈາກອົງການຄຸ້ມຄອງສື່ມວນຊົນທີ່ກ່ຽວຂ້ອງ.

**ມາດຕາ 44. ການເພີ່ມລາຍການວິທະຍຸກະຈາຍສຽງ ແລະ ໂທລະ**

24/VII
ຂ້າມຈາໜ່າຍ

ພາບ

ສະຖານີວິທະຍຸກະຈາຍສຽງ ແລະ ໂທລະພາບ ທີ່ມີຄວາມຕ້ອງການ ເພີ່ມລາຍການໃດໜຶ່ງນັ້ນ ຕ້ອງໄດ້ຮັບອະນຸຍາດຈາກອົງການຄຸ້ມຄອງສື່ມວນຊົນທີ່ກ່ຽວຂ້ອງ.

## ມາດຕາ 45. ລາຍການກະຈາຍສຽງ ແລະ ພາບ

ລາຍການກະຈາຍສຽງ ແລະ ພາບ ຂອງສື່ມວນຊົນລາວ ຕ້ອງຜະລິດ ແລະ ອອກອາກາດຈາກດິນແດນ ສປປ ລາວ. ໃນກໍລະນີທີ່ມີຈຸດປະສົງກະຈາຍລາຍການເຫລົ່ານັ້ນ ຢູ່ຕ່າງປະເທດ ຕ້ອງໄດ້ຮັບອະນຸຍາດຈາກອົງການຄຸ້ມຄອງສື່ມວນຊົນ ທີ່ກ່ຽວຂ້ອງ.

ລາຍການກະຈາຍສຽງ ແລະ ພາບ ຂອງຕ່າງປະເທດ ທີ່ມີຈຸດປະສົງອອກອາກາດ ຢູ່ ສ ປ ປ ລາວ ຕ້ອງໄດ້ຮັບອະນຸຍາດຈາກລັດຖະບານ ແຫ່ງ ສ ປ ປ ລາວ.

## ມາດຕາ 46. ການນໍາໃຊ້ ສື່ຜ່ານອິນເຕີເນັດ

ການນໍາໃຊ້, ການບໍລິການ ສື່ຜ່ານອິນເຕີເນັດ ຕ້ອງໄດ້ປະສານສົມທົບ ແລະ ໄດ້ຮັບອະນຸຍາດ ຈາກອົງການທີ່ມີສິດກ່ຽວຂ້ອງ ພ້ອມທັງປະຕິບັດລະບຽບກົດໝາຍຢ່າງເຂັ້ມງວດ .

## ມາດຕາ 47. ການສໍາເນົາຜະລິດຕະພັນສື່ມວນຊົນ

ຜະລິດຕະພັນສື່ມວນຊົນທຸກປະເພດ ຕ້ອງສະຫງວນລິຂະສິດ, ສຳເນົາ ແລະ ເກັບຮັກສາໄວ້ເປັນຢ່າງດີ ຢ່າງໜ້ອຍຊາວຫ້າ ປີ.

### ມາດຕາ 48. ການຈັດກອງປະຊຸມຖະແຫລງຂ່າວ

ການຈັດຕັ້ງ ແລະ ບຸກຄົນ ທີ່ມີຈຸດປະສົງຈັດກອງປະຊຸມຖະແຫລງຂ່າວກ່ຽວກັບບັນຫາໃດໜຶ່ງ ຕ້ອງໄດ້ຮັບອະນຸຍາດ ຈາກອົງການຄຸ້ມຄອງສື່ມວນຊົນ ພາຍຫລັງທີ່ໄດ້ປະສານສົມທົບ ແລະ ເຫັນດີ ຈາກອົງການທີ່ກ່ຽວຂ້ອງແລ້ວ.

### ມາດຕາ 49. ການເງິນຂອງອົງການສື່ມວນຊົນ

ການເງິນຂອງອົງການສື່ມວນຊົນຂອງລັດ ແມ່ນ ໄດ້ມາຈາກງົບປະມານຂອງລັດ, ລາຍຮັບວິຊາການ, ການຊ່ວຍເຫລືອ, ສະໜັບສະໜູນ ຈາກບຸກຄົນ ແລະ ການຈັດຕັ້ງ ຢູ່ພາຍໃນ ແລະ ຕ່າງປະເທດ.

ອົງການສື່ມວນຊົນ ສາມາດສ້າງກອງທຶນເພື່ອພັດທະນາສື່ມວນຊົນຢ່າງຖືກຕ້ອງ ແລະ ສອດຄ່ອງກັບລະບຽບກົດໝາຍກ່ຽວກັບການເງິນ.

ການຄຸ້ມຄອງ ແລະ ນຳໃຊ້ການເງິນ, ກອງທຶນຂອງອົງການສື່ມວນຊົນຂອງລັດ ໄດ້ກຳນົດໄວ້ ໃນລະບຽບການສະເພາະ ໂດຍສອດຄ່ອງກັບກົດໝາຍວ່າດ້ວຍ ງົບປະມານແຫ່ງລັດ ແລະ ກົດໝາຍ ອື່ນທີ່ກ່ຽວຂ້ອງ.

ອົງການສື່ມວນຊົນ ມີສິດດຳເນີນທຸລະກິດ ແລະ ໃຫ້ການບໍລິການໃດໜຶ່ງ ຕາມຄວາມສາມາດຂອງຕົນ ແລະ ຕາມລະບຽບກົດໝາຍ ເພື່ອສ້າງລາຍຮັບເພີ່ມສຳລັບພັດທະນາຕົນເອງ.

## ໝວດທີ VII
## ຂໍ້ຫ້າມ

### ມາດຕາ 50. ຂໍ້ຫ້າມສຳລັບອົງການສື່ມວນຊົນ

ຂໍ້ຫ້າມສຳລັບອົງການສື່ມວນຊົນ ມີ ດັ່ງນີ້:

1. ຫ້າມຍຸຍົງ ສົ່ງເສີມ ການກະທຳທີ່ເປັນການສ້າງຄວາມເສື່ອມເສຍ ໃຫ້ແກ່ຜົນປະໂຫຍດ ຂອງຊາດ ແລະ ປະຊາຊົນ;
2. ຫ້າມເປີດເຜີຍຄວາມລັບຂອງຊາດ ແລະ ຄວາມລັບທາງລັດຖະການ ;
3. ຫ້າມແບ່ງແຍກຄວາມສາມັກຄີ ແລະ ສ້າງຄວາມອາຄາດບາດໝາງ ລະຫວ່າງປະຊາຊົນບັນດາເຜົ່າ ແລະ ຄວາມສາມັກຄີລະຫວ່າງຊາດ;
4. ຫ້າມສົ່ງເສີມ ການໃຊ້ຄວາມຮຸນແຮງ ແລະ ການໂຄສະນາຮັບໃຊ້ສົງຄາມຮຸກຮານທຸກປະເພດ;

5. ຫ້າມອອກຂ່າວ ບິດເບືອນຄວາມຈິງ, ແຕະຕ້ອງ ເຖິງກຽດສັກສີຂອງການຈັດຕັ້ງ ແລະ ບຸກຄົນ;
6. ຫ້າມໂຄສະນາຍຸຍົງສົ່ງເສີມ ການກໍ່ອາຊະຍາ ກຳ ແລະ ອະບາຍຍະມຸກ ເຊັ່ນ : ການເສບສິ່ງ ເສບຕິດ, ການຫລິ້ນການພະນັນ, ການເປັນນັກ ເລງອັນຕະພານ, ການທຳສິ່ງລາມົກອະນາ ຈານ ;
7. ຫ້າມໂຄສະນາສົ່ງເສີມ ສິ່ງມຶນເມົາເກີນຂອບ ເຂດ, ການເຊື່ອຖືງົມງວາຍ ແລະ ສິ່ງຫຍໍ້ທໍ້ ອື່ນໆ;
8. ຫ້າມເຜີຍແຜ່ ຂ່າວ, ບົດ ແລະ ລາຍການ ທີ່ມີ ຄຳສັ່ງຫ້າມ ຫລື ຖືກຍຶດໄວ້ແລ້ວ;
9. ຂໍ້ຫ້າມອື່ນ ທີ່ໄດ້ກຳນົດໄວ້ໃນລະບຽບກົດ ໝາຍ.

**ມາດຕາ 51. ຂໍ້ຫ້າມສຳລັບບຸກຄະລາກອນສື່ມວນຊົນ**

ຫ້າມນັກຂ່າວ, ຜູ້ຮ່ວມງານ, ນັກວິຊາການດ້ານສື່ມວນ ຊົນ ສ້າງຂໍ້ມູນຂ່າວສານທຸກປະເພດທີ່ຝືນກັບຈັນຍາບັນຂອງ ນັກຂ່າວລາວ, ໃຊ້ພາສາຊອດກະຈາ, ໃຊ້ຄວາມຫຍາບຊ້າ ລວມທັງ ຂໍ້ຫ້າມສຳ ລັບອົງການສື່ມວນຊົນ ທີ່ໄດ້ກຳນົດໄວ້ໃນ ມາດຕາ 50 ຂອງກົດໝາຍສະບັບນີ້. ສຳລັບໂຄສົກ, ພິທີ ກອນ ແມ່ນ ຫ້າມ ນຸ່ງຖື, ແຕ່ງຕົວບໍ່ສຸພາບ ໃນເວລາອອກອາກາດ ທາງໂທລະພາບ.

**ມາດຕາ 52. ຂໍ້ຫ້າມສໍາລັບການຈັດຕັ້ງ ແລະ ບຸກຄົນອື່ນ**

ຂໍ້ຫ້າມສໍາລັບການຈັດຕັ້ງ ແລະ ບຸກຄົນອື່ນ ມີ ດັ່ງນີ້:

1. ຫ້າມຂັດຂວາງ ການເຄື່ອນໄຫວຂອງນັກຂ່າວ ແລະ ແຊກແຊງ ເນື້ອໃນຂອງຂ່າວ, ບົດ ແລະ ລາຍການ ທີ່ຖືກຕ້ອງຕາມ ລະບຽບກົດໝາຍ ;
2. ຫ້າມຂັດຂວາງ ການຜະລິດ ແລະ ການເຜີຍແຜ່ ຜະລິດຕະພັນສື່ມວນຊົນທຸກປະເພດ ທີ່ຖືກຕ້ອງ ຕາມລະບຽບກົດໝາຍ;
3. ຫ້າມຜະລິດ, ນໍາເຂົ້າ ແລະ ເຜີຍແຜ່ຜະລິດຕະພັນສື່ມວນຊົນ ໂດຍບໍ່ໄດ້ຮັບອະນຸຍາດ;
4. ຫ້າມໃຫ້ສິນບົນ ແກ່ນັກຂ່າວ ຫລື ອົງການສື່ມວນຊົນ ເພື່ອອອກຂ່າວ, ບົດ ຕາມຈິດໃຈຂອງຕົນ;
5. ຫ້າມໃຊ້ຄວາມຮຸນແຮງ, ບັງຄັບ, ນາບຂູ່, ໃສ່ຮ້າຍປ້າຍສີ, ໝິ່ນປະໝາດ, ຮ້າຍດ່າ, ໃຊ້ຄວາມຫຍາບຊ້າ ຕໍ່ນັກຂ່າວ ຫລື ອົງການສື່ມວນຊົນ ;
6. ຂໍ້ຫ້າມອື່ນ ທີ່ໄດ້ກໍານົດໄວ້ໃນລະບຽບກົດໝາຍ.

# ໝວດທີ VIII
# ການຄຸ້ມຄອງ ແລະ ກວດກາ ສື່ມວນຊົນ

**ມາດຕາ 53. ອົງການຄຸ້ມຄອງສື່ມວນຊົນ**

ລັດຖະບານ ຄຸ້ມຄອງສື່ມວນຊົນ ຢ່າງລວມສູນ ແລະ ເປັນເອກະພາບ ໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ກະຊວງຖະແຫລງຂ່າວ ແລະ ວັດທະນະທຳ ປະສານສົມທົບກັບບັນດາກະຊວງ, ຂະແໜງການອື່ນທີ່ກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນ ໃນການຄຸ້ມຄອງສື່ມວນຊົນໂດຍກົງ.ອົງການຄຸ້ມຄອງສື່ມວນຊົນ ປະກອບດ້ວຍ :

- ກະຊວງຖະແຫລງຂ່າວ ແລະ ວັດທະນະທຳ ;
- ພະແນກຖະແຫລງຂ່າວ ແລະ ວັດທະນະທຳ ແຂວງ, ນະຄອນ ;
- ຫ້ອງການຖະແຫລງຂ່າວ ແລະ ວັດທະນະທຳ ເມືອງ, ເທດສະບານ.

**ມາດຕາ 54. ໜ້າທີ່ ແລະ ສິດຂອງກະຊວງຖະແຫລງຂ່າວ ແລະ ວັດທະນະທຳ**

ໃນການຄຸ້ມຄອງສື່ມວນຊົນ ກະຊວງຖະແຫລງຂ່າວ ແລະ ວັດທະນະທຳ ໃນຖານະເປັນເສນາທິການໃຫ້ລັດຖະບານ ມີໜ້າທີ່ ແລະ ສິດ ດັ່ງນີ້:

1. ຄົ້ນຄວ້າ ຮ່າງກົດໝາຍ, ນະໂຍບາຍ, ແຜນຍຸດທະສາດ, ແຜນງານ, ແຜນການພັດທະນາ ສື່ມວນ

ຊົນ ເພື່ອສະເໜີຕໍ່ລັດຖະບານພິຈາລະນາ, ຕົກລົງ ແລ້ວ ຈັດຕັ້ງປະຕິບັດ ;

2. ໂຄສະນາ, ເຜີຍແຜ່ ລະບຽບກົດໝາຍກ່ຽວກັບສື່ມວນຊົນ;
3. ຈັດຕັ້ງ, ຄຸ້ມຄອງ ແລະ ຊີ້ນຳ ການເຄື່ອນໄຫວຂອງອົງການສື່ມວນຊົນໃນຂອບເຂດທົ່ວປະເທດ;
4. ກໍ່ສ້າງ, ບຳລຸງ, ຍົກລະດັບໃຫ້ແກ່ພະນັກງານສື່ມວນຊົນ ທາງດ້ານການເມືອງ, ວິຊາສະເພາະ ແລະ ຈັນຍາບັນ;
5. ຄົ້ນຄວ້າ, ກຳນົດມາດຕະຖານເຕັກນິກ ແລະ ນຳໃຊ້ ວິທະຍາສາດ, ເຕັກໂນໂລຊີ ທີ່ກ້າວ ໜ້າທັນສະໄໝ ໃນຂົງເຂດສື່ມວນຊົນ;
6. ຄົ້ນຄວ້າ, ພິຈາລະນາ ອະນຸມັດ ແລະ ຖອນໃບອະນຸຍາດສ້າງຕັ້ງ ແລະ ເຄື່ອນໄຫວ ຂອງ ອົງການສື່ມວນຊົນ, ອະນຸຍາດການຖ່າຍທອດສົດ, ການໃຊ້ຊ່ອງຄົ້ນຄວາມຖີ່ຂອງສື່ເອ ເລັກໂຕຣນິກ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ;
7. ອະນຸຍາດ ແລະ ຍົກເລີກການນຳເຂົ້າ-ສົ່ງອອກຜະລິດຕະພັນສື່ມວນຊົນທຸກຊະນິດ ຕາມຄວາມຮັບຜິດຊອບຂອງຕົນ;
8. ຄຸ້ມຄອງ ສື່ສິ່ງພິມ ແລະ ການສຳເນົາຜະລິດຕະ

ພັນສື່ມວນຊົນ ໃນຂອບເຂດທີ່ຕົນຮັບຜິດ ຊອບ;

9. ປະຕິບັດນະໂຍບາຍ ແລະ ມາດຕະການຕ່າງໆ ຕໍ່ອົງການສື່ມວນຊົນ ແລະ ບຸກຄະລາ ກອນ ຂອງສື່ມວນຊົນ ທີ່ຕົນຮັບຜິດຊອບ;
10. ສະກັດກັ້ນ, ແກ້ໄຂຄຳສະເໜີ ແລະ ການເຄື່ອນໄຫວຂອງສື່ມວນຊົນ ທີ່ຂັດກັບລະບຽບ ກົດໝາຍ ຕາມພາລະບົດບາດຂອງຕົນ;
11. ປະສານສົມທົບກັບຂະແໜງການອື່ນທີ່ກ່ຽວຂ້ອງ ແລະ ອົງການປົກຄອງແຂວງ, ນະຄອນໃນການຄຸ້ມຄອງການເຄື່ອນໄຫວຂອງສື່ມວນຊົນ ລວມທັງສື່ມວນຊົນລາວ ທີ່ພົວພັນກັບຕ່າງ ປະເທດ ແລະ ຄຸ້ມຄອງການເຄື່ອນໄຫວ ຂອງສື່ມວນຊົນຕ່າງປະເທດ ຢູ່ ສ ປ ປ ລາວ;
12. ຕິດຕາມ ແລະ ສັງລວມຜົນການໂຄສະນາ, ຖະແຫລງຂ່າວຂອງສື່ມວນຊົນ ໃນແຕ່ລະໄລຍະ, ສັງລວມວິໄຈຂ່າວຂອງສື່ມວນຊົນຕ່າງປະເທດ ກ່ຽວກັບ ສ ປ ປ ລາວ ເພື່ອເປັນຂໍ້ມູນ ແລະ ລາຍງານຕໍ່ ລັດຖະບານຢ່າງເປັນປົກກະຕິ;
13. ພົວພັນ ແລະ ຮ່ວມມືສາກົນທາງດ້ານສື່ມວນຊົນ ຕາມການມອບໝາຍ;
14. ປະຕິບັດໜ້າທີ່ ແລະ ສິດອື່ນ ກ່ຽວກັບການຄຸ້ມຄອງສື່ມວນຊົນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບ

ກົດໝາຍ.

## ມາດຕາ 55. ໜ້າທີ່ ແລະ ສິດ ຂອງພະແນກຖະແຫລງຂ່າວ ແລະ ວັດທະນະທໍາແຂວງ, ນະຄອນ

ໃນການຄຸ້ມຄອງສື່ມວນຊົນ ພະແນກຖະແຫລງຂ່າວ ແລະ ວັດທະນະທໍາ ແຂວງ ແລະ ນະຄອນ ມີໜ້າທີ່ ແລະ ສິດ ດັ່ງນີ້:

1. ຄົ້ນຄວ້າ, ເຜີຍແຜ່ ແລະ ຈັດຕັ້ງປະຕິບັດນະໂຍບາຍ, ແຜນງານ, ແຜນການ, ລະບຽບກົດໝາຍ, ຄໍາສັ່ງ, ຄໍາແນະນໍາ, ແຈ້ງການ ກ່ຽວກັບສື່ມວນຊົນ;
2. ຄົ້ນຄວ້າ ແລະ ກໍານົດທິດທາງ, ແຜນການ ໂຄສະນາ ໃຫ້ແກ່ສື່ມວນຊົນຂອງຕົນ ໃນແຕ່ລະໄລຍະ;
3. ຄຸ້ມຄອງ ແລະ ຊີ້ນໍາ ການເຄື່ອນໄຫວຂອງສື່ມວນຊົນ ທີ່ຕົນຮັບຜິດຊອບ ;
4. ຂື້ນແຜນຄຸ້ມຄອງ, ປັບປຸງ ແລະ ຂະຫຍາຍວຽກງານສື່ມວນຊົນເພື່ອຮັບໃຊ້ໜ້າທີ່ການເມືອງ ແລະ ການບໍລິການປະຊາຊົນບັນດາເຜົ່າ ຢູ່ພາຍໃນແຂວງ, ນະຄອນ ໃຫ້ວ່ອງໄວ, ແຫລມຄົມ ແລະ ມີປະສິດທິຜົນ;
5. ຄຸ້ມຄອງ ການເຄື່ອນໄຫວຂອງນັກຂ່າວພາຍໃນ ແລະ ຕ່າງປະເທດທີ່ເຄື່ອນໄຫວເກັບກໍາຂ່າວຢູ່

ພາຍໃນແຂວງ, ນະຄອນ;

6. ຄຸ້ມຄອງສື່ສິ່ງພິມ ແລະ ການນຳເຂົ້າ-ສົ່ງອອກ ຜະລິດຕະພັນສື່ມວນຊົນທຸກຊະນິດ ຕາມ ຄວາມຮັບຜິດຊອບຂອງຕົນ;
7. ຄົ້ນຄວ້າ ແລະ ສະເໜີສ້າງຕັ້ງ ຫລື ຍຸບເລີກ ອົງການສື່ມວນຊົນທີ່ຂຶ້ນກັບຕົນ ຕໍ່ກະຊວງຖະແຫລງຂ່າວ ແລະ ວັດທະນະທຳ ເພື່ອພິຈາລະນາ ຕາມການເຫັນດີຂອງອົງການປົກຄອງ ແຂວງ, ນະຄອນ;
8. ແນະນຳ, ປຸກລະດົມ, ຊຸກຍູ້ ການຈັດຕັ້ງ, ບຸກຄົນທີ່ກ່ຽວຂ້ອງ ເພື່ອເກັບກຳຂ່າວ ແລະ ສະໜອງຂ່າວໃຫ້ແກ່ສື່ມວນຊົນ;
9. ແກ້ໄຂຄຳສະເໜີ, ປະຕິບັດນະໂຍບາຍ ແລະ ມາດຕະການຕ່າງໆ ຕໍ່ອົງການສື່ມວນ ຊົນ ແລະ ບຸກຄະລາກອນ ຂອງສື່ມວນຊົນ ທີ່ຕົນຮັບຜິດຊອບ;
10. ຕິດຕາມ, ສະຫລຸບ ແລະ ປະເມີນຜົນ ວຽກງານສື່ມວນຊົນ ແລ້ວລາຍງານໃຫ້ ເຈົ້າແຂວງ, ເຈົ້າຄອງນະຄອນ ແລະ ກະຊວງຖະແຫລງຂ່າວ ແລະ ວັດທະນະທຳ ຢ່າງເປັນປົກກະຕິ;
11. ພົວພັນ ຮ່ວມມື ດ້ານສື່ມວນຊົນກັບຕ່າງປະເທດ ຕາມການມອບໝາຍຂອງອົງການທີ່ມີ ສິດກ່ຽວ

24/7 ຫ້າມຈຳໜ່າຍ

ຂ້ອງ ;

12. ປະຕິບັດໜ້າທີ່ ແລະ ສິດອື່ນ ກ່ຽວກັບການຄຸ້ມຄອງວຽກງານສື່ມວນຊົນ ຕາມທີ່ໄດ້ກໍານົດໄວ້ໃນລະບຽບກົດໝາຍ.

**ມາດຕາ 56. ໜ້າທີ່ ແລະ ສິດ ຂອງຫ້ອງການຖະແຫລງຂ່າວ ແລະ ວັດທະນະທໍາ ເມືອງ, ເທດສະບານ**

ໃນການຄຸ້ມຄອງສື່ມວນຊົນ ຫ້ອງການຖະແຫລງຂ່າວ ແລະ ວັດທະນະທໍາ ເມືອງ, ເທດສະ ບານ ມີໜ້າທີ່ ແລະ ສິດ ດັ່ງນີ້:

1. ເຜີຍແຜ່ ແລະຈັດຕັ້ງປະຕິບັດລະບຽບກົດໝາຍ, ຄໍາສັ່ງ, ຄໍາແນະນໍາ, ແຈ້ງການ ກ່ຽວກັບສື່ມວນຊົນ ຢູ່ພາຍໃນເມືອງ, ເທດສະບານຂອງຕົນ;
2. ແນະນໍາ, ປຸກລະດົມ, ຊຸກຍູ້ ການຈັດຕັ້ງຮາກຖານຢູ່ພາຍໃນເມືອງ, ເທດສະບານຂອງຕົນ ເພື່ອເກັບກໍາຂ່າວ ແລະ ສະໜອງຂ່າວ ໃຫ້ແກ່ສື່ມວນຊົນ;
3. ຄຸ້ມຄອງພາຫະນະສື່ມວນຊົນ ທີ່ເຄື່ອນໄຫວຢູ່ເມືອງ, ເທດສະບານຂອງຕົນ ໃຫ້ຖືກຕ້ອງ ຕາມລະບຽບກົດໝາຍ;
4. ຄຸ້ມຄອງການເຄື່ອນໄຫວຂອງນັກຂ່າວ ພາຍໃນ ແລະ ຕ່າງປະເທດ ທີ່ເຄື່ອນໄຫວເກັບກໍາຂ່າວຢູ່

ພາຍໃນ ເມືອງ, ເທດສະບານ ຂອງຕົນ;

5. ຄຸ້ມຄອງ ການນຳເຂົ້າ-ສົ່ງອອກ ຜະລິດຕະພັນສື່ມວນຊົນທຸກຊະນິດ ຕາມຄວາມຮັບຜິດ ຊອບຂອງຕົນ;
6. ຕິດຕາມ, ສະຫລຸບ ແລະ ປະເມີນຜົນ ວຽກງານສື່ມວນຊົນ ແລ້ວລາຍງານໃຫ້ ເຈົ້າເມືອງ, ຫົວໜ້າເທດສະບານ ແລະ ພະແນກ ຖະແຫລງຂ່າວ ແລະ ວັດທະນະທຳແຂວງ, ນະຄອນ ;
7. ປະຕິບັດໜ້າທີ່ ແລະ ສິດອື່ນ ກ່ຽວກັບການຄຸ້ມຄອງວຽກງານສື່ມວນຊົນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

### ມາດຕາ 57. ໜ້າທີ່ ແລະ ສິດ ຂອງຂະແໜງການ ແລະ ພາກສ່ວນອື່ນ

ບັນດາຂະແໜງການ, ອົງການ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ມີໜ້າທີ່ ແລະ ສິດ ປະສານ ສົມທົບກັບຂະແໜງການຖະແຫລງຂ່າວ ແລະ ວັດທະນະທຳ ໃນການຄຸ້ມຄອງ, ສົ່ງເສີມ ແລະ ພັດທະນາວຽກງານສື່ມວນຊົນ ຕາມພາລະບົດບາດ ຂອງຕົນ.

### ມາດຕາ 58. ອົງການກວດກາສື່ມວນຊົນ

ອົງການກວດກາສື່ມວນຊົນ ປະກອບດ້ວຍ :

- ອົງການກວດກາພາຍໃນ ຊຶ່ງແມ່ນອົງການດຽວກັນກັບອົງການຄຸ້ມຄອງສິ່ງມວນຊົນ ຕາມ ທີ່ໄດ້ກໍານົດໄວ້ໃນມາດຕາ 53 ຂອງກົດໝາຍສະບັບນີ້ ;
- ອົງການກວດກາພາຍນອກ ຊຶ່ງແມ່ນເຈົ້າຂອງອົງການສິ່ງມວນຊົນ, ຄະນະສະເພາະກິດ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ.

### ມາດຕາ 59. ໜ້າທີ່ ແລະ ສິດຂອງອົງການກວດກາສິ່ງມວນຊົນ

ອົງການກວດກາສິ່ງມວນຊົນ ມີໜ້າທີ່ ແລະ ສິດ ດັ່ງນີ້ :

1. ກວດກາການຈັດຕັ້ງປະຕິບັດລະບຽບກົດໝາຍກ່ຽວກັບສິ່ງມວນຊົນ ;
2. ກວດກາວຽກງານ ກໍຄືການເຄື່ອນໄຫວຂອງອົງການສິ່ງມວນຊົນ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ;
3. ອອກຄໍາສັ່ງ, ຄໍາແນະນໍາ, ແຈ້ງການ ໃຫ້ອົງການສິ່ງມວນຊົນທີ່ຂຶ້ນກັບຕົນ ເພື່ອປັບປຸງ, ປ່ຽນແປງ ຫລື ຢຸດເຊົາ ການເຄື່ອນໄຫວວຽກງານສິ່ງມວນຊົນ ທີ່ເຫັນວ່າບໍ່ສອດຄ່ອງກັບ ລະບຽບກົດໝາຍ;
4. ສະເໜີໃຫ້ການຈັດຕັ້ງທີ່ກ່ຽວຂ້ອງ ອອກຄໍາສັ່ງ, ແນະນໍາ ຫລື ແຈ້ງການໃຫ້ປັບປຸງ, ປ່ຽນແປງ

ຫລື ໃຫ້ຢຸດເຊົາ ການເຄື່ອນໄຫວວຽກງານສື່ມວນຊົນ ຖ້າເຫັນວ່າບໍ່ຖືກຕ້ອງກັບ ລະບຽບກົດໝາຍ ຫລື ມີການລະເມີດຂໍ້ຫ້າມ ຕາມແຕ່ກໍລະນີທີ່ໄດ້ກຳນົດໄວ້ໃນມາດ ຕາ 50, 51 ແລະ 52 ຂອງກົດໝາຍສະບັບນີ້ ;

5. ພົວພັນປະສານສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງ ຢູ່ສູນກາງ ແລະ ທ້ອງຖິ່ນ ໃນການປະຕິບັດວຽກງານກວດກາຂອງຕົນ ;
6. ສະຫລຸບ ແລະ ລາຍງານ ຜົນຂອງການປະຕິບັດວຽກງານກວດກາ ແຕ່ລະໄລຍະໃຫ້ຂັ້ນເທິງຂອງຕົນຢ່າງເປັນປົກກະຕິ ;
7. ປະຕິບັດໜ້າທີ່ ແລະ ສິດອື່ນ ກ່ຽວກັບການກວດກາສື່ມວນຊົນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 60. ເນື້ອໃນການກວດກາ**

ການກວດກາສື່ມວນຊົນ ມີເນື້ອໃນຕົ້ນຕໍ ດັ່ງນີ້:

1. ກວດກາ ການສ້າງ ແລະ ປະຕິບັດແຜນການ, ໂຄງການຂອງອົງການສື່ມວນຊົນ ແຕ່ລະ ໄລຍະ ;
2. ກວດກາ ເນື້ອໃນການອອກຂ່າວຜ່ານສື່ສິ່ງພິມ ແລະ ສື່ເອເລັກໂຕຣນິກ ;

3. ກວດກາ ການສ້າງ, ບຳລຸງ, ນຳໃຊ້ ແລະ ປະຕິບັດນະໂຍບາຍຕໍ່ບຸກຄະລາກອນ ຂອງສິ່ມວນຊົນ ;
4. ກວດກາ ການປະກອບ ແລະ ການນຳໃຊ້ພື້ນຖານວັດຖຸ, ພາຫະນະ, ອຸປະກອນ ແລະ ງົບປະມານ ຂອງສື່ມວນຊົນ ;
5. ກວດກາການປະຕິບັດລະບຽບກົດໝາຍຂອງສື່ມວນຊົນ.

**ມາດຕາ 61. ຮູບການກວດກາ**

ການກວດກາສື່ມວນຊົນ ດຳເນີນດ້ວຍສາມຮູບການດັ່ງນີ້:

1. ການກວດກາຕາມລະບົບປົກກະຕິ;
2. ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ;
3. ການກວດກາແບບກະທັນຫັນ.

ການກວດກາຕາມລະບົບປົກກະຕິ ແມ່ນ ການກວດກາທີ່ໄດ້ດຳເນີນໄປຕາມແຜນການ ຢ່າງເປັນປະຈຳ ແລະ ມີກຳນົດເວລາອັນແນ່ນອນ.

ການກວດກາ ໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ແມ່ນການກວດການອກແຜນການ ເມື່ອເຫັນວ່າມີຄວາມຈຳເປັນ ໂດຍແຈ້ງໃຫ້ຜູ້ທີ່ຈະຖືກກວດກາ ຮູ້ລ່ວງໜ້າ.

ການກວດກາແບບກະທັນຫັນ ແມ່ນ ການກວດກາຢ່າງຮີບດ່ວນ ໂດຍບໍ່ໄດ້ແຈ້ງໃຫ້ຜູ້ທີ່ຈະຖືກກວດກາ ຮູ້ລ່ວງໜ້າ.

ໃນການດຳເນີນການກວດກາສິ່ມວນຊົນ ເຈົ້າໜ້າທີ່ຂອງອົງການກວດກາ ຕ້ອງປະຕິບັດ ໜ້າທີ່ ແລະ ສິດ ໃຫ້ຖືກຕ້ອງຕາມລະບຽບກົດໝາຍຢ່າງເຂັ້ມງວດ.

## ໝວດທີ IX
## ວັນ, ເຄື່ອງໝາຍ ແລະ ຕາປະທັບ ຂອງສື່ມວນຊົນ

### ມາດຕາ 62. ວັນຂອງສື່ມວນຊົນ

ວັນທີ 13 ສິງຫາ ແມ່ນ ວັນສື່ມວນຊົນແຫ່ງຊາດ. ພ້ອມກັນນັ້ນ ສື່ມວນຊົນແຕ່ລະປະເພດ ກໍມີວັນສະເພາະຂອງຕົນ ເພື່ອສະເຫລີມສະຫລອງ ແລະ ທວນຄືນເຖິງມູນເຊື້ອ, ຜົນງານ, ບົດຮຽນ ເພື່ອ ປັບປຸງ, ພັດທະນາ ວຽກງານສື່ມວນຊົນໃຫ້ດີຂຶ້ນ.

### ມາດຕາ 63. ເຄື່ອງໝາຍ ແລະ ຕາປະທັບ ຂອງສື່ມວນຊົນ

ສື່ມວນຊົນແຕ່ລະປະເພດ ມີເຄື່ອງໝາຍ ແລະ ຕາປະທັບ ເປັນຂອງຕົນເອງ ເພື່ອນຳໃຊ້ເຂົ້າ ໃນການເຄື່ອນໄຫວວຽກງານທາງລັດຖະການ ຊຶ່ງກະຊວງຖະແຫລງຂ່າວ ແລະ ວັດທະນະທຳ ເປັນຜູ້ ວາງອອກ.

## ໝວດທີ X
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

### ມາດຕາ 64. ນະໂຍບາຍຕໍ່ຜູ້ມີຜົນງານ

ບຸກຄົນ ຫລື ການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນການປະກອບສ່ວນເຂົ້າໃນວຽກງານສື່ມວນຊົນ ຈະໄດ້ຮັບການຍ້ອງຍໍ ເຊັ່ນ: ຫລຽນໄຊ, ຫລຽນກາ, ໃບຍ້ອງຍໍ, ນາມມະຍົດ ແລະ ນະໂຍບາຍອື່ນ ຕາມຄວາມເໝາະສົມ.

### ມາດຕາ 65. ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ ຫລື ການຈັດຕັ້ງ ທີ່ລະເມີດລະບຽບກົດໝາຍກ່ຽວກັບວຽກງານສື່ມວນຊົນ ລວມທັງ ຂໍ້ຫ້າມທີ່ໄດ້ກຳນົດໄວ້ໃນມາດຕາ 50, 51 ແລະ 52 ຂອງກົດໝາຍສະບັບນີ້ ຈະຖືກປະຕິບັດມາດຕະ ການ ຕາມກໍລະນີເບົາ ຫລື ໜັກ ຄື : ສຶກສາອົບຮົມ, ກ່າວເຕືອນ, ປັບໃໝ, ໂຈະ ການເຄື່ອນໄຫວ ຊົ່ວຄາວ; ຖອນໃບອະນຸຍາດສ້າງຕັ້ງ ແລະ ເຄື່ອນໄຫວວຽກງານສື່ມວນຊົນ, ບັດນັກຂ່າວ, ບັດນັກວິຊາ ການດ້ານສື່ມວນຊົນ; ໃຊ້ແທນຄ່າເສຍຫາຍທາງແພ່ງ ຫລື ລົງໂທດ ທາງອາຍາ.

# ໝວດທີ XI
# ບົດບັນຍັດສຸດທ້າຍ

**ມາດຕາ 66. ການຈັດຕັ້ງປະຕິບັດ**

ລັດຖະບານແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດກົດ ໝາຍສະບັບນີ້.

**ມາດຕາ 67. ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດ ພາຍຫລັງ ທີ່ກາສິບວັນ ນັບແຕ່ວັນປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ ເປັນຕົ້ນໄປ.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບກົດໝາຍສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ປະທານສະພາແຫ່ງຊາດ

ທອງສິງ ທຳມະວົງ

ພິມທີ່ໂຮງພິມ ສຳນັກພິມ ແລະ ຈຳໜ່າຍປຶ້ມ ແຫ່ງລັດ
ຕາມ ທບ 018ພຈ12022009
ຈຳນວນພິມ 1.500 ຫົວ, ພິມຄັ້ງທີ I